ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ

**Copyright © 2006 by BAPTISTWAY PRESS®.**

ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະອັນທີຈິດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ຂ004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1- 4
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 5-7
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 5-7
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 8- 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 8-10
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

## ຄຳແນະນຳສຳລັບຄຣູສອນ

## ບົດຮຽນທີ 1

## ຮຽກຮ້ອງໃຫ້ສິດສອນຕາມຫລັກແລະດຳຣົງຊີວິດໃຫ້ຖືກຕ້ອງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຕີໂມທຣວ 1:1-19

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຕີໂມທຣວ ບົດທີ 1

**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕຽນທີ່ສິດສອນຕາມຫລັກ ແລະດຳເນີນຊີວິດຖືກຕ້ອງຕາມພຣະທັມຂອງພຣະເຈົ້ານັ້ນ ຕ້ອງອີງໃສ່ການຄິດເຖິງພຣະຄຸນແລະຄວາມຮັກຂອງພຣະອົງ

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງທີ່ສຳຄັນຫລາຍສຳລັບທ່ານ--ຄວາມເມດຕາຄຸນຂອງພຣະເຈົ້າ ຫລືວ່າການຖົກຖຽງກັນເຣື່ອງສາສນາບໍ່ ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍໃຫ້ໃຜຜູ້ນຶ່ງ ໄດ້ເຂົ້າໃຈໃນຄວາມເມດຕາຄຸນຂອງພຣະເຈົ້ານີ້ ຕ້ອງອາສັຍຫລັກຄຳສອນທີ່ຖືກຕ້ອງແລະດຳຣົງຊີວິດຖືກຕາມຫລັກຄຳສອນນັ້ນ.

### ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຈົ່ງອ່ານຄຳແນະນຳຂອງຢານອນຫລັບ ໃນຂໍ້ຄວາມຕໍ່ໄປນີ້ "ກິນນຶ່ງເມັດ ກ່ອນເວລາເຂົ້າບ່ອນນອນ. ອາດຈະມີການມຶນເມົາ" ເປັນຫຍັງຈຶ່ງມີຄຳວ່າ ອາດຈະມີການມຶນເມົາ ຕື່ມເຂົ້າໄປນຳ? ເພາະວ່າຢານີ້ມີພະລັງທີ່ເຮັດໃຫ້ເຮົາມຶນເມົາແລະຢາກນອນ ແລະຢານີ້ກໍແມ່ນຜລິດອອກມາເພື່ອການນີ້ໂດຍສະເພາະ.

2. ຈົ່ງຕັກເຕືອນນັກຮຽນວ່າເຮົາຢູ່ໃນໂລກແຫ່ງຄວາມບໍ່ແນ່ນອນ. ຫລາຍສິ່ງຫລາຍຢ່າງທີ່ເຮົາເຫັນວ່າສຳຄັນ ແຕ່ແລ້ວມັນກໍບໍ່ແມ່ນຂອງຈິງ ແລະກໍຍັງບໍ່ຍັ້ງຢືນ.
   ຫນູນໃຈນັກຮຽນໃຫ້ຟັງຄຳເວົ້າດັ່ງຕໍ່ໄປນີ້ໃຫ້ດີໆ:
   - ຖ້າທ່ານຊື້ ທ່ານຈະໄດ້ສິ່ງໃດສິ່ງນຶ່ງເພີ້ມໃຫ້
   - ອີກ 3 ປີຈະຂາຍເລ ເພາະຈະປິດການຄ້າແລ້ວ
   - ເປີດ 24/7, ເວັ້ນວັນຈັນວັນດຣວ
   - ຈົ່ງເຮັດຕາມຄຳສັ່ງ, ຢ່າເຮັດຕາມທີ່ຂ້ອຍເຮັດ
   - ຮັບປະກັນໄດ້ເຖິງ 99 ເປີເຊັນ
   - ຮູບພາບ ທັມຊາດທີ່ຫນ້າຈັບໃຈ

3. ເຮົາຈະເຫັນໄດ້ວ່າ ໂປໂລ ບອກຕີໂມທຣວ ບໍ່ໃຫ້ນຳຄຣິສຈັກຕິດຕາມໂລກ ຫລືວ່າຕາມແດ່ບໍ່ຕາມແດ່. ຈົ່ງຕິດຕາມຫລັກຄຳສອນໂດຍການດຳເນີນຊີວິດ ແລະການເປັນຢູ່.

### ນຳພາສຶກສາພຣະຄັມພີ

4. ໃຫ້ຂຽນຫົວຂໍ້ບົດຮຽນໃສ່ກະດານ:
   (1) ຕັກເຕືອນຄຣູສອນປອມ (1:1-4)
   (2) ຈົ່ງສແວງຫາຄຳສອນທີ່ຈະເພີ້ມຄວາມເຊື່ອ (1:5-11)

(3) ຈົ່ງຕິດຕາມຄວາມເຊື່ອຂອງເຮົາ 1:12-19

5. ອ່ານ ຂໍ້ 1-4 ແລ້ວວາງຄຳຖາມໆນັກຮຽນ ດັ່ງຕໍ່ໄປນີ້:
   - ❖ ໂປໂລສັ່ງຕີໂມທຽວວ່າຢ່າງໃດ?
   - ❖ ຄວາມໝາຍທີ່ສຳຄັນທີ່ສຸດຂອງໂປໂລຄືອັນໃດ ໃນຄຳວ່າ "ຕີໂມທຽວຜູ້ເປັນລູກແທ້ຂອງເຮົາໃນຄວາມເຊື່ອ" ?
   - ❖ ເປັນຫຍັງໂປໂລຈຶ່ງແນະນຳໃຫ້ຕີໂມທຽວປັກຫລັກຢູ່ເອເຟໂຊ?
   - ❖ ແມ່ນຫຍັງຄືຄຳສອນປອມ, ແມ່ນຫຍັງຄືນິຍາຍຕ່າງໆ?

6. ຄຳວ່າ " ພຣະເມດຕາຄຸນຂອງພຣະເຈົ້າໝາຍຄວາມວ່າຢ່າງໃດ?"

7. ອ່ານ 1: 5 ຫາ 11. ຖາມ: ຄຸນນະລັກສະນະຂອງຄຳສອນທີ່ຖືກຕ້ອງນັ້ນຄືອັນໃດ?ເຮົາຄວນຈະພິຈາຣະນາຫລືບໍ່ວ່າອັນໃດສອນຈິງ ແລະອັນໃດສອນຜິດ?

8. ກົດໝາຍແຕ່ງຕັ້ງໄວ້ສຳລັບໃຜ? (1:9-10)

9. ອ່ານ 1 ຕທ 12-19 ໃນຕອນນີ້ ອາດບໍ່ແມ່ນເທື່ອທຳອິດທີ່ໂປໂລບອກວ່າ ໃຫ້ຕິດຕາມຄວາມເຊື່ອຂອງລາວ. ໃຫ້ນັກຮຽນເປີດໄປ ຟປ 1:21 ຊຶ່ງໂປໂລກ່າວວ່າ "ເພາະວ່າຖ້າເຮົາມີຊີວິດ ພຣະຄຣິດກໍເປັນຊີ ວິດນັ້ນ." ສົນທະນາແລກປ່ຽນຄວາມຄິດເຫັນກັນ

10. ການສອນທີ່ຖືກຫລັກ ເຮັດໃຫ້ເຮົາດຳເນີນຊີວິດທີ່ຖືກຕ້ອງຢ່າງໃດ?

11. ຂໍ້ 12-19 "ຈົ່ງຕິດຕາມຄວາມເຊື່ອຂອງເຮົາ" ໂປໂລໄດ້ຮັບຂອງພຣະຣາຊທານ, ພຣະຄຸນ ແລະລາວກໍຫວັງຢາກໃຫ້ທຸກຄົນໄດ້ຮັບເໝືອນກັນ.

12. ຖ້າບໍ່ມີພຣະເມດຕາກະຣຸນາຂອງພຣະເຈົ້າ ພວກເຮົາຈະເປັນຢ່າງໃດ?ພວກເຮົາຄວນລະນຶກເຖິງພຣະເມດຕາຄຸນຂອງພຣະເຈົ້າທຸກວັນບໍ່? ຫລືວ່າຢ່າງໃດ?

13. ອະທິຖານຂອບພຣະຄຸນ ຖ້າເປັນໄປໄດ້ໃຫ້ອະທິຖານຜູ້ລະເລັກລະນ້ອຍ

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# <u>ຄຳແນະນຳສຳລັບຄຣູສອນ</u>

# <u>ບົດຮຽນທີ 2</u>

# <u>ຈົ່ງອະທິຖານເພື່ອສິດເສຣີພາບ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** 1 ຕີໂມທຽວ 2:1-7

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** 1 ຕີໂມທຽວ 2:1-7

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ອະທິຖານເພື່ອຜູ້ນຳ ແມ່ນເຮັດໃຫ້ຕົວເຮົາເອງມີຄວາມສງົບສຸກ ແລະເຮັດໃຫ້ການດຳຣົງຊີວິດ ມີສັນຕິສຸກ.

**<u>ຄຳຖາມເພື່ອສຳຣວດ:</u>** ເປັນຫຍັງຈົ່ງອະທິຖານອ້ອນວອນເພື່ອຜູ້ນຳ ຫລືຜູ້ທີ່ມີຕຳແນ່ງສູງ?

**<u>ຈຸດປະສົງຂອງບົດຮຽນ:</u>** ສອນໃຫ້ເຮົາຮູ້ເຖິງຄວາມສັມພັນໃນການອ້ອນວອນໃຫ້ຜູ້ນຳ ເພື່ອການດຳຣົງຊີວິດ ແລະຈະໄດ້ປະກາດພຣະກິດຕິຄຸນຢ່າງເສຣີ.

## <u>ແຜນການສິດສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u>

1. ຖາມທຸກຄົນໃນຫ້ອງຮຽນເບິ່ງວ່າ ຄຳອະທິຖານຢ່າງນີ້ມັກໄດ້ຍິນເວລາໃດ? (ຟັງໃຫ້ດີໆ)
    - "ພຣະເຈົ້າຊົງປະເສີດ, ຂອບພຣະຄຸນທີ່ພຣະອົງຊົງປະທານອາຫານຄາບນີ້. ອາແມນ. (ກ່ອນຮັບປະທານອາຫານ)
    - "ພຣະຜູ້ເປັນເຈົ້າ ໂຜດຮັກສາພວກຂ້ານ້ອຍໃຫ້ມີຄວາມປອດພັຍ ແລະຊົດຊ່ວຍໃນເວລາຫລິ້ນຢູ່ດ້ວຍ" (ກ່ອນຫລິ້ນກິລາຕ່າງໆ)
    - "ພຣະຜູ້ເປັນເຈົ້າ ໂປດໃຫ້ຄວາມສລາດຫລັກແຫລມ ແມ່ນວ່າຈະໄດ້ສຶກສາ ຫລືບໍ່ກໍຕາມ ໂຜດໃຫ້ຂ້ານ້ອຍເຂົ້າໃຈແລະເຮັດໄດ້ທຸກຢ່າງດ້ວຍເຖີດ" (ກ່ອນຈະເຂົ້າຫ້ອງສອບເສັງ)
    - "ພຣະບິດາເຈົ້າ ຂອບພຣະຄຸນທີ່ຮັບຟັງຄຳອະທິຖານຂອງພວກຂ້ານ້ອຍ ເວລາມາຮ່ວມຊຸມນຸມກັນ (ເວລານະມັສການຫລືມາປະຊຸມກັນ.)

2. ຄຳຖາມ: ເປັນຫຍັງຈຶ່ງອ້ອນວອນອະທິຖານ?

## <u>ນຳພາການສຶກສາພຣະຄັມພີ</u>

3. ຈົ່ງເບິ່ງລຳດັບບົດຮຽນສຳລັບວັນນີ້:
    (1) ອ້ອນວອນອະທິຖານເພື່ອທຸກຄົນ (2:1-2)
    (2) ຈຸດປະສົງຂອງການອ້ອນວອນອະທິຖານ (2:3-7)

4. ອ່ານຂໍ້ 1-2 ຮຽກຮ້ອງໃຫ້ນັກຮຽນ ເບິ່ງພຣະຄັມພີຂອງເຂົາເຈົ້າໄປນຳດ້ວຍ ແລະສັງເກດຄຳເວົ້າຂອງໂປໂລ 4

ຄຳໃນຂໍ້ທີ 1. (ອ້ອນວອນ, ໄຫວ້ວອນ, ທູນຂໍ, ແລະຂອບພຣະຄຸນ ແກ່ຄົນທັງປວງ.

5. ຄຳຖາມ: ເປັນຫຍັງຈຶ່ງອ້ອນວອນອະທິຖານເພື່ອຄົນທັງປວງ, ເປັນຫຍັງຈຶ່ງບໍ່ອ້ອນວອນເພື່ອຄຣິສຕຽນເທົ່ານັ້ນ? (ຕອບແລະສົນທະນາ)

6. ສັງເກດເບິ່ງຂໍ້ 3 ອີກ ຖ້າເຮັດແນວນັ້ນຈະເປັນຢ່າງໃດ? (2:2)

7. ຂໍ້ 4 ຫາຂໍ້ 7 ອ່ານໃຫ້ດັງໆ. ແລ້ວຖາມ:
   - ✓ ພຣະເຈົ້າມີພຣະປະສົງຢາກໃຫ້ຜູ້ໃດແດ່ໄດ້ຮັບຄວາມພົ້ນ? (ຄວາມລອດພົ້ນ)
   - ✓ ຖ້າໃຜຜູ້ນຶ່ງຫາກຮັບເອົາຄວາມຈິງ ຫລືຮັບເອົາພຣະກິດຕິຄຸນທີ່ມາຈາກພຣະເຈົ້າໝາຍຄວາມວ່າແນວໃດ?
   - ✓ ພຣະເຢຊູເປັນຜູ້ກາງແຕ່ຜູ້ດຽວໝາຍຄວາມວ່າຢ່າງໃດ?
   - ✓ "ເປັນຄ່າໄຖ່" ແປວ່າຫຍັງ? ແລະມີຄວາມໝາຍຫຍັງສຳລັບພວກເຮົາ?
   - ✓ ໂປໂລມີຄວາມຮັບຜິດຊອບຢ່າງໃດ ໃນຄຳທີ່ວ່າມີພຣະເຈົ້າອົງດຽວ ແລະມີຜູ້ກາງແຕ່ພຽງ ຜູ້ດຽວ?

<u>**ໜູນໃຈໃຫ້ມີການກະທຳ:**</u>

8. ອ່ານ ກົດຣັຖທັມມູນຂອງອະເມຣິກາຂໍ້ທຳອິດ. ໃຫ້ຄຣູພະຍາຍາມຊອກຫາມາໃຫ້ໄດ້. ຈຸດປະສົງໃນການອ້ອນວອນອະທິຖານຂອງພວກເຮົາກໍແມ່ນຢາກປ່າວປະກາດດ້ວຍສັນຕິສຸກ ໃຫ້ຄົນທັງປວງໄດ້ຮັບສັນຕິສຸກແລະໄດ້ຮັບຄວາມລອດພົ້ນ (2:3-7) ເຖິງປານນັ້ນສມັຍນີ້ກໍຍັງມີຄວາມຫຍຸ້ງຍາກຣະຫວ່າງສາສນາກັບການປົກຄອງ.

9. ການອະທິຖານຕາມສະຖານທີ່ສາທາຣະນະເດເປັນຢ່າງໃດ? ໃນໂຮງຮຽນເດ?

10. ຮຽກຮ້ອງໃຫ້ທຸກຄົນອ້ອນວອນອະທິຖານ ເພື່ອປະເທດຊາດ, ເພື່ອປະເທດລາວ, ເພື່ອທຸກປະເທດທີ່ການປ່າວປະກາດຍັງຖືກຂັດຂວາງຢູ່.

*ສຈ. ດຣ. ບຸນໂຮມ ພົມມະຈັນ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 3
## ໜ້າທີ່ຂອງຜູ້ຍິງແລະຜູ້ຊາຍໃນຄຣິສຕະຈັກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຕີໂມທຽວ 2:8-15

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຕີໂມທຽວ 2:8-15

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຍິງແລະຜູ້ຊາຍທີ່ເປັນຄຣິສຕຽນຄວນດຳເນີນຊີວິດທີ່ເປັນໜ້າໂຄຣົບນັບຖື ໃຫ້ສົມກັບເປັນຄົນທີ່ນັບຖືພຣະເຈົ້າ

**ຄຳຖາມເພື່ອສຳຣວດ:** ຜູ້ຍິງຄວນຈະດຳເນີນຊີວິດຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະສະແດງວ່າຄຳສອນຂອງໂປໂລຍັງຄົງມີຄວາມໝາຍຕໍ່ຄຣິສຕະຈັກ ແລະຍັງເປັນສິ່ງນຳພາການປະພຶດປະຕິບັດສຳລັບຊາຍແລະຍິງດ້ວຍ.

### ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ຂໍແນະນຳໃຫ້ອ່ານເຣື່ອງລາວຂອງເມັຍອາຈານທີ່ເດີນທາງໄປ ອູກັນດາ. (ໃນເຈັ້ຍບົດຮຽນ) ສົນທະນາກັນກ່ອນຈະເຂົ້າຫາເຣື່ອງໃນພຣະຄັມພີ ໂດຍອີງໃສ່ຕົວຈິງແລະລະບຽບການຂອງຄະນະຊາວເທີນບັບຕິສຂອງພວກເຮົາ. ພວກເຮົາຢາກປະກາດ ແຕ່ຍັງມີຮີດຄອງປະເພນີຂັດຂວາງ, ຍັງມີເຣື່ອງເພດ (ຊາຍ, ຍິງ) ມາຂັດຂວາງ, ຍັງມີວັທນະທັມມາຂັດຂວາງ, ຍັງມີຫລາຍສິ່ງຫລາຍຢ່າງມາຂັດຂວາງ ຊຶ່ງເຮັດໃຫ້ ຜູ້ທີ່ເຊື່ອຫລືຜູ້ທີ່ຈະມາເຊື່ອມີຄວາມສັບສົນເທົ່າວ່າອັນໃດເປັນອັນໃດແທ້. ໂປໂລຢາກໃຫ້ເຂົ້າໃຈຫລາ ແມ່ນເຣື່ອງການປະພຶດຂອງຜູ້ຊາຍແລະຜູ້ຍິງແລ້ວຫລີກຈາກການສິດສອນນອກຫລັກການ.

### ສຶກສາພຣະຄັມພີ

2. ໃຫ້ນັກຮຽນອ່ານ ຂໍ້ 8 ແລະກໍໃຫ້ວາງຄຳຖາມ: ຄຳແນະນຳນີ້ແມ່ນສິ່ງໄປເຖິງຜູ້ໃດ?
   - ຍ້ອນບັນຫາອັນໃດ ໂປໂລຈຶ່ງສົ່ງຈົດໝາຍນີ້ອອກໄປ?
   - ແມ່ນຫຍັງຄືທີ່ມາຂອງຄວາມຂັດແຍ້ງແລະການຜິດຖຽງກັນ?
   - ແມ່ນຫຍັງຄືຄວາມດີເດັ່ນຂອງການໄຫວ້ວອນດ້ວຍຍໍມືບໍຣິສຸດ?

3. ໃຫ້ອ່ານໃນເຈັ້ຍບົດຮຽນທີ່ວາງຣະບຽບການໄປແລ້ວ. ໃຫ້ຫ້ອງຮຽນເປັນຄົນເວົ້າເອງວ່າອັນໃດສົມຄວນ ແລະອັນໃດບໍ່ສົມຄວນ.
4. ເມື່ອມາເຖິງຂໍ້ຄຳທີ່ວ່າຄຳສອນຈາກຜູ້ຍິງ. ຄຣູສອນຄວນອະທິບາຍເຖິງຄຳສອນທີ່ຜູ້ຍິງໄດ້ສິດສອນລູກເລີ້ມແຕ່ແຮກເກີດຈົນໃຫຍ່ກ້າໜ້າບານຈົນເຂົ້າໂຮງຮຽນໄດ້. ໂປໂລກໍໄດ້ຍົກຕົວຢ່າງແລະຍົກຍ້ອງຜູ້ຍິງ ໃນຫລາຍຕອນໃຫ້ເບິ່ງໃນເຈັ້ຍບົດຮຽນ.

5. ຂໍ້ 11-15 ໃຫ້ທຸກຄົນອ່ານງຽບໆ ຫລືວ່າອ່ານໃນໃຈ. ຂີດກະດານແບ່ງເປັນສອງສ່ວນ

**ໂປໂລເວົ້າວ່າ:** **ໂປໂລບໍ່ໄດ້ເວົ້າວ່າ:**

| ໂປໂລເວົ້າວ່າ: | ໂປໂລບໍ່ໄດ້ເວົ້າວ່າ: |
|---|---|
| ໃຫ້ຜູ້ຍິງຮຽນຮູ້ຢ່າງງຽບໆ | ສະເພາະຜູ້ຊາຍຄວນຈະເປັນຜູ້ທີ່ ໄດ້ຮັບກຽດສູງ |
| ບໍ່ໃຫ້ໃຊ້ອຳນາດເຫນືອຜູ້ຊາຍໃນເວລານະມັສການ | ຜູ້ຍິງ ຫ້າມສິດສອນແລະເທສນາເດັດຂາດ |
| ບໍ່ໃຫ້ເປັນຄົນເວົ້າຫລາຍໃນເວລານະມັສການ | ຜູ້ຊາຍຈະເຫນືອຜູ້ຍິງທຸກຢ່າງ |
| ຢ່າເຊື່ອຟັງຄຳສອນທີ່ບິດເບືອນ | ຜູ້ຍິງທີ່ມີລູກຈຶ່ງຈະລອດໄດ້ |
| ຈົ່ງທຳດີ, ແກ່ຄອບຄົວໃຫ້ສົມກັບຜູ້ທີ່ເຊື່ອພຣະເຈົ້າ | |

6. ຈົ່ງບອກນັກຮຽນອີກວ່າ ເຖິງຢ່າງໃດກໍແລ້ວແຕ່ ຈຸດປະສົງຂອງໂປໂລແມ່ນຢາກໃຫ້ຄຣິສຕະຈັກຂອງພຣະເຈົ້າ ໄດ້ຮັບກຽດປາສຈາກບັນຫາ.

**ຄຳຫນູນໃຈສຳລັບວັນນີ້:**

7. ອ່ານຄຳຖາມໃນເຈັ້ຍບົດຮຽນ ແລ້ວໃຫ້ນັກຮຽນຕອບ ແຕ່ລະຂໍ້ ໆ ໄປ ຫນູນໃຈໄປດ້ວຍ

8. ເຊື້ອເຊີນໃຫ້ຜູ້ຍິງຖາມບັນຫາ ຫລືວ່າມີສິ່ງໃດທີ່ຍັງສົງໃສຢູ່.

9. ອະທິຖານປິດ ຕຽມຕົວເຂົ້ານະມັສການພຣະເຈົ້າ.

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 4
## ຜູ້ນຳຄຣິສຕະຈັກທີ່ເຫມາະສົມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຕີໂມທຽວ 3:1-13

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຕີໂມທຽວ 3:1-13; ຕີໂຕ 1:5-9

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ນຳໃນຄຣິສຕະຈັກຈຳເປັນຕ້ອງມີຄຸນນະພາບສູງດ້ານຈິດວິນຍານ, ແລະມີຄວາມເປັນຫ່ວງເປັນໃຍຄວາມເຊື່ອ ແລະຕາງຫນ້າຄຣິສຕະຈັກຂອງພຣະເຈົ້າ

**ຄຳຖາມເພື່ອສຳຣວດ:** ຄຣິສຕະຈັກຕ້ອງການຜູ້ນຳຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະຣວບຣວມຄຳແນະນຳກ່ຽວກັບຜູ້ນຳຄຣິສຕະຈັກ ແລະຊັ່ງຊາຕີລາຄາໂດຍອີງໃສ່ຄຳແນະນຳນັ້ນ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ:

1. ຖາມນັກຮຽນແຕ່ລະຄົນ ແລະໃຫ້ທຸກຄົນໄດ້ໃຫ້ຄຳຄິດເຫັນວ່າພວກເຂົາຕ້ອງການຜູ້ນຳຢ່າງໃດ? ຄຣິສຕະຈັກຕ້ອງການຜູ້ນຳຢ່າງໃດ?

2. ຖ້າເປັນໄປໄດ້ໃຫ້ເຊີນເຖົ້າແກ່ມາຈາກໂບດອື່ນ ແລ້ວກໍມາສຳພາດປະມານ 5-10 ນາທີ. ຫລັງຈາກທີ່ສພາດແລ້ວໃຫ້ມາຖາມກັບຄົນຂອງເຮົາເອງວ່າ:
   - ຄຸນສົມບັດ ຂອງຜູ້ນຳໃນໂບດເຮົາຄວນຈະເປັນຢ່າງໃດ?
   - ຄົນພວກນີ້ ໄດ້ເລືອກເຟັ້ນຂຶ້ນມາດ້ວຍກອງປະຊຸມຂອງພວກເຮົາຢ່າງໃດ?
   - ຕາມພື້ນຖານອັນສຳຄັນແລ້ວເຖົ້າແກ່ຈະເຮັດວຽກຫຍັງແດ່?
   - ຫ້ອງຮຽນຂອງພວກເຮົາຈະອະທິຖານຢ່າງໃດສຳລັບທ່ານແລະເຖົ້າແກ່ໃນທຸກວັນ?

3. ອະທິຖານເພື່ອເຖົ້າແກ່ແລະສິດຍາພິບານ

### ນຳພາສຶກສາພຣະຄັມພີ

4. ຍົກເອົາຄຸນສົມບັດຂອງສິດຍາພິບານແລະເຖົ້າແກ່ຂຶ້ນມາໂດຍອີງໃສ່ເຈັ້ຍບົດຮຽນ. ເວລານີ້ໂປໂລກຳລັງປະເຊີນຫນ້າກັບຄູ່ຕໍ່ສູ້ ຄືຄຣູສອນປອມ. ໃນຄຣິສຕະຈັກຂອງພວກເຮົາໃນວັນນີ້ ຜູ້ນຳທີ່ມີຄວາມເຂັ້ມແຂງຝ່າຍຈິດວິນຍານເປັນສິ່ງທີ່ພວກເຮົາຕ້ອງການທີ່ສຸດ, ເພາະບໍ່ແມ່ນແຕ່ການສິດສອນປອມເທົ່ານັ້ນ ວັດຖຸສິ່ງຂອງຍັງໄດ້ເຮັດໃຫ້ຄວາມເຊື່ອຫັນເຫໄປອີກ.

5. ອ່ານຂໍ້ 1-7 ໃຫ້ດັງໆ. ແລ້ວເນັ້ນຫນັກແຕ່ລະຈຸດ. ແລະແລ້ວກໍໃຫ້ຫັນມາສົນທະນາກ່ຽວກັບຄຳວ່າເປັນຜົວຂອງ

ຍິງຄົນດຽວ. ໃຫ້ໃຊ້ຕົວຢ່າງໃນເຈັ້ຍບົດຮຽນ ແລະກໍໃຫ້ສັງເກດເຖິງວຽກຂອງສິດຍາພິບານ.

6. ຄຸນສົມບັດໃນ ຂໍ້ 8-13 ແມ່ນສຳລັບເຖົ້າແກ່ມີສິ່ງໃດແດ່ ໃຫ້ນັກຮຽນເປັນຜູ້ອ່ານແລ້ວກໍໃຫ້ອະທິບາຍວ່າເຮັດຫຍັງແດ່ ແລະຄວນຈະເປັນຢ່າງໃດ? (ໃນທີ່ນີ້ ນັກຮຽນສາມາດສົນທະນາແລະສະແດງຄວາມ ເຫັນອອກມາ) ສົນທະນາ "ບໍ່ເປັນຄົນສອງລີ້ນ" (3:8)

7. ຂໍ້ 11 ໃຫ້ເບິ່ງໃນເຈັ້ຍບົດຮຽນວ່າ ພວກຜູ້ຍິງເດຄວນຈະເປັນຢ່າງໃດ? ຜູ້ຍິງມີບົດບາດຫລາຍຢ່າງໃນທາງທີ່ດີ ໃນການສິດສອນລູກໃນຄອບຄົວແລະອື່ນໆ......

8. <u>**ຫົວຂໍ້ ທີ່ຈະສົນທະນາກັນ.**</u>

- ຜູ້ນຳຄຣິສຕະຈັກ ແຕກຕ່າງຈາກການເປັນຜູ້ນຳຄອບຄົວບໍ່?
- ຄຣິສຕະຈັກບໍ່ແມ່ນເປັນບ່ອນພັກຜ່ອນ ແມ່ນບ່ອນທີ່ເຮັດວຽກຮ່ວມກັນ
- ຜູ້ນຳການຄ້າແລະຜູ້ນຳສັງຄົມ ຄວນຖອດຖອນບົດຮຽນໃນການເຮັດວຽກໃນໂບດ
- ຜູ້ນຳທີ່ໄດ້ຮັບຜົນສຳເຣັດ ແມ່ນຜູ້ທີ່ຍອມຟັງຄຳຕັກເຕືອນຈາກຜູ້ອື່ນ
- ຜູ້ນຳທີ່ໄດ້ຮັບຜົນດີນັ້ນ ຍ່ອມເປັນຕົວຢ່າງທີ່ດີໃຫ້ແກ່ຜູ້ອື່ນ
- ຜູ້ນຳທີ່ດີນັ້ນຕ້ອງເຮັດວຽກຢ່າງເຕັມກຳລັງ ບໍ່ແມ່ນເຮັດແບບແປະໆ ບາງໆ
- ເຖົ້າແກ່ແລະສິດຍາພິບານຕ້ອງເຮັດໃຫ້ຄົນອື່ນເຫັນ ບໍ່ແມ່ນໄດ້ຍິນຊື່ໆ
- ທຸກໆຄົນສາມາດເປັນຜູ້ນຳຂອງໂບດໄດ້.

9. ໃຫ້ຄົນນຶ່ງອ່ານ ຕີໂຕ 1:5 ເມື່ອອ່ານແລ້ວຖາມນັກຮຽນວ່າຄ້າຍຄືກັນຫລືບໍ່? ມີຂໍ້ໃດແດ່ທີ່ຄືກັນ.

10. ເຫັນເປັນຢ່າງໃດຖ້າສົມທຽບເຖົ້າແກ່ແລະສິດຍາພິບານຂອງພວກເຮົາໃສ່ກັບມາຕຖານຂອງ 1 ຕີໂມທຽວ. ສົນທະນາແລ້ວນຳພາອ້ອນວອນອະທິຖານ.

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ບົດແນະນຳການສິດສອນ
# ບົດຮຽນທີ 5
# ກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຕີໂມທຽວ 4:1-16
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** 1 ຕີໂມທຽວ 4:1-16
**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຈະກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງ
**ຄຳຖາມເພື່ອການຄົ້ນຄວ້າ:** ພວກເຮົາຈະກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງແລະຫ້າວຫັນໄດ້ຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊີ້ສ່ອງທາງໃຫ້ກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງ ແລະຕັດສິນໃຈນຳມາປະຕິບັດ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຂຽນຄຳວ່າ "ແຂງແຮງ" "robust" ແລະ "ຫ້າວຫັນ" "vigorus" ໃສ່ກະດານ. ໃຫ້ຖາມສະມາຊິກຫ້ອງວ່າ ພວກ
   ທານຄິດວ່າຢ່າງໃດ ເມື່ອພວກທ່ານເຫັນສອງຄຳນີ້? ໃຫ້ຖາມຕໍ່ໄປວ່າ ມີຄຳໃດແດ່ທີ່ມີຄວາມໝາຍຢ່າງດຽວກັນກັບສອງຄຳນີ້? ໃຫ້ເວລາພວກເຂົາສົນທະນາແລະອອກຄວາມຄິດເຫັນ. (ໃຫ້ໃຊ້ວັຈນະນຸກົມພາສາອັງກິດຊ່ອຍ ເພາະວ່າ ພາສາອັງກິດໃຫ້ເນື້ອຄວາມຫລາຍກວ່າ.)

2. ໃຫ້ບັນລະຍາຍວ່າ ໃນບົດຮຽນຂອງມື້ນີ້ ໂປໂລໄດ້ທ້າທາຍຕີໂມທຽວແລະຜູ້ທີ່ເຊື່ອໃນເມືອງເອເຟໂຊໃຫ້ພວກເຂົາ ກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງແລະຫ້າວຫັນ.

### ສຶກສາບົດຮຽນ

3. ໃຫ້ຂຽນຫົວຂໍ້ຂອງບົດຮຽນຂອງມື້ນີ້ໃສ່ກະດານ:
   - ປະຖິ້ມຄວາມເຊື່ອ (1 ຕີໂມທຽວ 4:1-5)
   - ທວນກັບມາຫາຊີວິດຂອງຕີໂມທຽວ(1 ຕີໂມທຽວ 4:6-16)

4. ໃຫ້ຫາສະມາຊິກຫ້ອງຫ້າຄົນມາອ່ານພຣະທັມ 1 ຕີໂມທຽວ 4:1-5. ແຕ່ລະຄົນໃຫ້ອ່ານແຕ່ຂໍ້ດຽວ ເລີ້ມແຕ່ຂໍ້ທີ 1 ແລະຂໍ້ຕໍ່ໆໄປ.

5. ໃຫ້ຕັ້ງຄຳຖາມດັ່ງຕໍ່ໄປນີ້:
   - ຄຳວ່າ "ປະຖິ້ມຄວາມເຊື່ອ" (4:1) ນັ້ນໝາຍຄວາມວ່າຢ່າງໃດ?
   - ເປັນຫຍັງ ຫລືວ່າ ເຫດໃດ ຝູງຊົນຈຶ່ງຖືກທົດລອງ "ໃຫ້ປະຖິ້ມ" (4:1) ?
   - ຜູ້ທີ່ຂັດຂວາງໂປໂລນັ້ນ ພວກເຂົາແນະນຳໃຫ້ໃຊ້ຊີວິດຢ່າງໃດ?
   - ໂປໂລໄດ້ກ່າວຢ່າງໃດ ເພື່ອຕໍ່ສູ້ກັບພວກຄຣູສອນປອມ?

- ພວກເຮົາໄດ້ຮຽນຮູ້ອັນໃດແດ່ ກ່ຽວກັບການນິຣະມິດສ້າງຈາກຂໍ້ຄວາມທີ່ໂປໂລໄດ້ກ່າວມານັ້ນ?
- ພວກເຮົາມີຄຣູສອນປອມຄ້າຍຄືກັນກັບຢ່າງນີ້ຢູ່ໃນຖ້ານກາງສັງຄົມຂອງພວກເຮົາບໍ່?
- ພວກເຮົາຈະສາມາດຂັດຂວາງຕໍ່ຄວາມພະຍາຍາມຂອງວິນຍານທີ່ລໍ້ລວງແລະຄໍາສອນຂອງພວກຜີຮ້າຍໄດ້ຢ່າງໃດ?

6. ນໍາສະມາຊິກຫ້ອງໄປຂໍ້ທີ 6. ໃຫ້ຖາມວ່າ<u>ວຽກຂອງຕີໂມທຽວແມ່ນອັນໃດ?</u> (ຊີ້ບອກໃຫ້ພວກເຂົາເຫັນສິ່ງຕ່າງໆ).

7. ອະທິບາຍໃຫ້ສະມາຊິກຫ້ອງຟັງວ່າພາກທີສອງຂອງບົດທີ 4 ຂໍ້ທີ 6-16 ບາງຂໍ້ກໍເປັນທີ່ລື້ງເຄີຍມາກ່ອນ-ຂໍ້ຕ່າງໆພວກເຮົາອາດຈະເຄີຍໄດ້ຍິນມາກ່ອນແລ້ວ.ໃຫ້ສະມາຊິກຫ້ອງອ່ານແຕ່ລະຕອນເປັນຂໍ້ໆ ຫລືບາງຕອນບາງຂໍ້ຈະມີຄວາມຫມາຍຕໍ່ຊີວິດຂອງພວກເຂົາ. ຮ້ອງຂໍໃຫ້ສະມາຊິກແຕ່ລະຄົນອ່ານໃຫ້ດັງໆ ແລະໃຫ້ອອກຄວາມຄິດເຫັນໃນຂໍ້ທີ່ຕົນອ່ານນັ້ນ.

8. ໃຫ້ກ່າວເນື້ອໃນໃຈຄວາມຂອງຂໍ້ທີ 6-16 ບັນລະຍາຍຄວາມຈິງຈາກພຣະຄັມພີ ແລະຄວາມຫມາຍຕ່າງໆທີ່ທ່ານໄດ້ສຶກສາຈັດຕຽມຈາກ <u>ບົດຮຽນຂອງສະມາຊິກຫ້ອງ ແລະຄູ່ມືຂອງຄຣູ</u>.

9. ຕໍ່ມາຫນູນໃຈໃຫ້ສະມາຊິກຫ້ອງມີພາກສ່ວນໃນການຄົ້ນຄ້ວາຄວາມຈິງຈາກພຣະຄັມພີດ້ວຍຄໍາຖາມດັ່ງຕໍ່ໄປນີ້:
   - ເປັນຫຍັງຈຶ່ງໃຫ້ພວກເຮົາເວັ້ນຫນີຈາກ "ນິຍາຍປະໂລມໂລກ ທີ່ພວກຜູ້ຍິງເຖົ້າເຄີຍເລົ່າໃຫ້ຟັງນັ້ນ"?
   - ການຝຶກຝົນທາງຝ່າຍຮ່າງກາຍແລະການຝຶກຝົນທາງຝ່າຍຈິດວິນຍານມີຄວາມແຕກຕ່າງກັນຢ່າງໃດ?
   - ເປັນຫຍັງພວກເຮົາຈະຕ້ອງເຮັດເຫມືອນໂປໂລເຮັດການຫນັກຫນ່ວງແລະອົດສາສູ້ ເພື່ອພວກເຮົາຈະໄດ້ກ້າວ
   - ສູ່ຊີວິດຄຣິສຕຽນທີ່ແຂງແຮງແລະຫ້າວຫັນ?
   - ເປັນຫຍັງການອ່ານພຣະຄັມພີໃນທີ່ປະຊຸມຈຶ່ງສໍາຄັນ?
   - ເປັນຫຍັງໂປໂລຈຶ່ງເປັນຫ່ວງໃນຄວາມກ້າວຫນ້າຂອງຕີໂມທຽວ?

## <u>ຫນູນໃຊ້ໃນການກະທໍາ</u>

10. ໃຫ້ໃຊ້ຄໍາຖາມຈາກ <u>ບົດຮຽນຂອງສະມາຊິກຫ້ອງ</u> ນໍາມາຖາມພວກເຂົາ. ຮ້ອງຂໍໃຫ້ສະມາຊິກຫ້ອງຕອບຄໍາຖາມທີ່ຖາມມານັ້ນ.

11. ໃຫ້ເຕືອນສະມາຊິກຫ້ອງຮູ້ວ່າ ການສຶກສາພຣະຄັມພີເປັນກຸ່ມນ້ອຍໆນັ້ນມີຄຸນຄ່າຫລາຍ ເນື່ອງຈາກວ່າແຕ່ລະຄົນຈະໄດ້ນໍາຄວາມຈິງຈາກພຣະຄັມພີນັ້ນໄປປະຕິບັດໃຊ້ໃນຊີວິດຂອງພວກເຂົາ. ຮ້ອງຂໍໃຫ້ພວກເຂົາເບິ່ງຂໍ້ທີ 6-16 ແລະຕຶກຕອງເບິ່ງຄໍາສັ່ງສອນຂອງໂປໂລ ຊຶ່ງໃຫ້ພວກເຂົານໍາມາປະຕິບັດໃນຊີວິດຂອງພວກເຂົາ. ຫນູນໃຈພວກເຂົາໃຫ້ຂອບຄຸນພຣະເຈົ້າທີ່ພວກເຂົາຈະໄດ້ຈະເຣີນກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງແລະຫ້າວຫັນ. ໃຫ້ທູນຂໍກັບພຣະເຈົ້າ ເພື່ອໃຫ້ພຣະອົງຊົງຊ່ອຍພວກເຂົາໃນສິ່ງຂາດຕົກບົກພ່ອງ. ຂໍໃຫ້ພຣະເຈົ້າຊ່ອຍໃຫ້ຈະເຣີນເຕີບໃຫຍ່ໃນທາງຂອງພຣະອົງ. ໃຫ້ອະທິຖານປິດ.

*ສຈ. ບຸນເຮັ່ງ ພົງປຣະພັນ*

## <u>ບົດແນະນຳຄຣູສອນ</u>

## <u>ບົດຮຽນທີ 6</u>

## <u>ພຣະເຈົ້າແລະເງິນຄຳ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** 1 ຕີໂມທຽວ 6:2-19

**<u>ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:</u>** 1 ຕີໂມທຽວ 6

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຄຣິສຕຽນຄວນຈະເອົາຄວາມຮັ່ງມີຂອງຕົນສົ່ງເສີມໂບດ

**<u>ຄຳຖາມເພື່ອການສຳຣວດ:</u>** ເຮົາຈະຮູ້ໄດ້ຢ່າງໃດວ່າເຮົາເປັນຄົນຮັກເງິນຫລາຍກວ່າພຣະເຈົ້າ

**<u>ຈຸດປະສົງຂອງບົດຮຽນນີ້:</u>** ການຮັ່ງມີຂອງເຮົາແມ່ນພຣະເຈົ້າເປັນຜູ້ໂຜດປະທານ

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.

## <u>ບົດນຳ</u>

ແມ່ເຖົ້າແລະແມ່ສອນເຣື່ອງຂອງພຣະເຈົ້າແກ່ຕີໂມທຽວແຕ່ຍັງນ້ອຍ (2ຕີໂມທຽວ 1:5, 3:15) ເປັນການປູກພຣະທັມພຣະເຈົ້າໃສ່ໃນໃຈໂດຍແມ່ເຖົ້າ ແລະແມ່ຂອງລາວເອງ ເມື່ອລາວໃຫຍ່ມາລາວກໍຮັບເຊື່ອພຣະເຈົ້າກັບໂປໂລໃນການທ່ອງທ່ຽວປະກາດຄັ້ງແຣກ(ກິຈການ 14:6-23). ຈົນໃນທີ່ສຸດລາວກໍກາຍເປັນອາຈານຕີໂມທຽວຮັບໃຊ້ພຣະເຈົ້າທີ່ເອເຟໂຊ, ສ່ວນໂປໂລຜູ້ເປັນອາຈານໃຫຍ່ຖືກຈຳຈອງທີ່ກຸງເຢຣູຊາເລັມຈຶ່ງມີໃຈເປັນຫ່ວງ ອາຈານໜຸ່ມຕີໂມທຽວຜູ້ທີ່ໂປໂລຮັກຄືລູກຊາຍຂອງເພິ່ນ ໂດຍສເພາະຢ່າງຍິ່ງແມ່ນດ້ານການຮັບໃຊ້ທີ່ ເມືອງຂອງພວກຄຣູສອນປອມ, ນອກນັ້ນໃນໂບດຂອງຕີໂມທຽວຍັງປະສົບບັນຫາເຣື່ອງຄຣິສຕຽນຮັກເງິນຫລາຍກວ່າຮັກພຣະເຈົ້າອີກ.

<u>ວິທີການສອນ</u>

1. ຖາມນັກຮຽນວ່າເຄີຍຟັງເພງ ເງິນ ຂອງຄຳຫລ້າ ໜໍ່ແກ້ວບໍ່ (ຫລືຫາກມີເພງຈຶ່ງເປີດໃຫ້ນັກຮຽນຟັງຈັກໜ່ອຍ).
2. ຫລັງຈາກອ້ອວອນແລ້ວຂໍໃຫ້ຜູ້ນຶ່ງອ່ານ 1 ຕີໂມທຽວ 6:1-5 **ຫລັກຄຳສອນ**

   ກ. ຂ້ອຍຂ້າໃຫ້ນັບຖືເຈົ້ານາຍ ຈະເປັນຜູ້ເຊື່ອຫລືບໍ່ເຊື່ອກໍຕາມໃຫ້ນັບຖືເພິ່ນ (ຂໍ້ 1-2).

   ຂ. ໃນສມັຍນັ້ນພວກຂ້ອຍຂ້າບໍ່ມີຖານະຕຳແໜ່ງອັນໃດລື່ນເຈົ້ານາຍ.

   ຄ. ຫາກຂ້າທາດມີຄຸນງາມຄວາມດີແທ້ໆຈະໄດ້ຮັບຕຳແໜ່ງດີຂຶ້ນ.

   ງ. ພວກເຈົ້ານາຍທີ່ເປັນຄຣິສຕຽນມັກຈະນຳເອົາຂ້າທາດມາໂບດເພື່ອຮັບເຊື່ອພຣະເຈົ້າ ນັ້ນນັບວ່າເປັນບຸນຄຸນອັນໃຫຍ່ຫລວງໃນຣະວ່າງຂ້າທາດແລະເຈົ້ານາຍ.

   ຈ. ທີ່ບ້ານພວກຂ້າທາດຍັງເປັນຂ້າທາດສເມີ, ໃນໂບດທັງຂ້າທາດແລະນາຍເປັນພີ່ນ້ອງກັນໃນພຣະເຈົ້າ.

   ສ. ໂປໂລສັ່ງຕີໂມທຽວໃຫ້ສອນຢ່າງມີຫລັກການຄືເອົາພຣະເຢຊູເປັນຫລັກ (ຂໍ້ 3).

ຊ. ຄຣູສອນປອມມັກເປັນຜູ້ຖືກຖຽງຕາມນິສັຍປອມຂອງເຂົາ ແລະເປັນຄົນໂລບອີກ (ຂໍ້ 4).

ຍ. ການນັບຖືພຣະເຈົ້າໄດ້ກຳໄລແນ່ນອນທາກປະຕິບັດຕາມການນັບຖືຂອງຕົນ (ຂໍ້ 5).

## 3. ອ່ານ 6:6-10 ພໍໃຈໃນສິ່ງທີ່ມີ

ກ. ການນັບຖືພຣະເຈົ້າທີ່ໄດ້ກຳໄລແມ່ນຜູ້ທີ່ພໍໃຈໃນສິ່ງຕົນເອງມີຢູ່ (ຂໍ້ 6).

ຂ. ທຸກຄົນມາໂຕເປົ່າ ເມື່ອອອກຈາກໂລກນີ້ກໍຈະໄປໂຕເປົ່າ(ຂໍ້ 7)ດ້ວຍວ່າຂອງໃນໂລກນີ້ຈະບໍ່ໃຊ້ໃນໂລກໜ້າ

ຄ. ການມີເຄື່ອງນຸ່ງຫົ່ມແລະມີອາຫານການກິນເປັນຄວາມຕ້ອງການຂອງຮ່າງກາຍຊົ່ວຄາວ (ຂໍ້ 8).

ງ. ຄົນທີ່ຢາກລ້ຳລວຍມັກຈະເຮັດການລັບລີ້ ທີ່ເປັນພິດພັຍແກ່ຕົນ (ຂໍ້ 9).

## 4. ອ່ານ 6:11-16 ຈົ່ງຫລີກໜີ

ກ. ຢ່າເຮັດ, ຢ່າເວົ້າ, ຢ່າພົວພັນ: ຢ່າແຕະຕ້ອງ, ຢ່າເບິ່ງ ເປັນຂໍ້ຫ້າມທີ່ໂປໂລສັ່ງ (ຂໍ້ 11)

ຂ. ອົດສາແຂ່ງຂັນສູ້ຕາມແນວທາງຂອງຄວາມເຊື່ອ ແປວ່າຢ່າຫວັນໄຫວໃນຍາມຍາກລຳບາກຫລືບັນຫາໃດ ແລະແຂ່ງຂັນຈົນໄດ້ພວງມາລັຍໃນຄາວສຸດທ້າຍ. (ຂໍ້ 12-16).

ຄ. ຈາກຂໍ້ 11-16 ມີຄຳສັ່ງສອງຢ່າງ 1. ໃຫ້ຫລີກໜີ. 2. ໃຫ້ເຮັດສິ່ງທີ່ຮຽງໄວ້ແລ້ວ 7 ຢ່າງໃນບົດຮຽນ.

## 5. ອ່ານ 6:17-19 ສອນຄົນຮັ່ງມີ

ກ. ຢ່າໃຫ້ເປັນຄົນອວດໂຕ ໂດຍວາງໃຈໃນຊັບຫລາຍກວ່າວາງໃຈໃນພຣະເຈົ້າ (ຂໍ້ 17).

ຂ. ສອນຄົນຮັ່ງມີໃຫ້ມີໃຈເອື້ອເຟື້ອເພື່ອແຜ່ ແປວ່າເສັຽສະລະຊ່ອຍເຫລືອຜູ້ອື່ນ ເພາະການເຮັດດັ່ງນີ້ຈະເປັນການທ້ອນໂຮມຊັບສົມບັດໄວ້ໄດ້ (ຂໍ້ 18-19).

<u>ຄຳຖາມ:</u>

1. ເຮົາໄດ້ນັບຖືເຈົ້ານາຍຂອງເຮົາແລ້ວບໍ່? ທາກບໍ່ທັນນັບຖືເຮົາຈະເລີ້ມມື້ໃດ?

2. ທາກເຮົາມີນາຍທີ່ເປັນຄຣິສຕຽນທີ່ນຳເຮົານະມັສການ ຫລືຮຽນພຣະຄັມພີທີ່ໂຮງງານ ເຮົາຈະເພີ້ມການນັບຖືເພິ່ນແນວໃດ?

3. ເຮັດແນວໃດເຮົາຈຶ່ງຈະພໍໃຈໃນສິ່ງທີ່ເຮົາມີຢູ່?

4. ເຮົາຈະໃຊ້ເງິນຄຳທີ່ເຮົາມີຢູ່ສົ່ງເສີມໂບດເຮົາຢ່າງໃດ?

*ສຈ. ທຸມພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 7
# ເລົ້າໂລມໃຫ້ຕັ້ງໝັ້ນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຂ ຕີໂມທຽວ 1:1-14
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ຂ ຕີໂມທຽວ 1
**ຈຸດສຳຄັນຂອງບົດຮຽນນີ້:** ໂອກາດສືບທອດການດີ
**ຄຳຖາມເພື່ອການສຳຣວດ:** ແມ່ນຫຍັງເຮັດໃຫ້ເຮົາຢາກສືບທອດ?
**ຈຸດປະສົງຂອງບົດຮຽນນີ້:** ເລົ້າໂລມໃຫ້ສືບທອດການດີ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ໂປໂລແລະຕີໂມທຽວຮ່ວມຮັບໃຊ້ພຣະເຈົ້ານຳກັນປະມານ 15 ປີ ຈຶ່ງໄດ້ພັດພາກຈາກກັນ, ໂປໂລຖືກຈັບຂັງຄຸກ ສ່ວນຕີໂມທຽວເປັນອາຈານທີ່ເມືອງເອເຟໂຊເປັນຄັ້ງທຳອິດທີ່ພັດພາກຈາກໂປໂລ. ຕລອດເວລາ 15 ປີທີ່ຮັບໃຊ້ພຣະເຈົ້າ ຕີໂມທຽວເປັນພຽງຜູ້ຊ່ອຍໂປໂລ ແລະໂປໂລເອງກໍມີໃຈຮັກແພງຕີໂມທຽວເໝືອນກັບລູກຂອງເພິ່ນແລະເພິ່ນກໍຮູ້ຈັກຕີໂມທຽວດີວ່າເປັນຜູ້ເຊື່ອພຣະເຈົ້າຢ່າງຈິງຈັງ ດ້ວຍເຫດນີ້ໂປໂລຈຶ່ງຫວັງໃຈຢ່າງຍິ່ງວ່າຕີໂມທຽວຈະຕ້ອງສືບຕໍ່ວຽກງານທີ່ໂປໂລໄດ້ເຮັດມານັ້ນຕໍ່ໄປເລື້ອຍໆ.

### ສແດງຄວາມນັບຖື 1:1-2

ກ. ຈົດໝາຍສມັຍໂບຮານຈະບອກກ່ອນວ່າຈາກຜູ້ໃດ ແລະສົ່ງເຖິງຜູ້ໃດ, ສ່ວນສມັຍນີ້ພາກັນຂຽນຈົດໝາຍຈົນຈົບແລ້ວຈຶ່ງບອກວ່າຈາກຜູ້ນັ້ນ, ຜູ້ນີ້.

ຂ. ໂປໂລອັຄສາວົກຂອງພຣະເຢຊູຄຣິດ;

1. ສາຣະພາບວ່າເປັນຂ້າໃຊ້ພຣະເຢຊູຄຣິດ.
2. ຄຳວ່າອັຄສາວົກ ເປັນນາມມະຍົດຜູ້ຮັບໃຊ້ໃກ້ຊິດພຣະເຢຊູ ຫລືຜູ້ເຫັນພຣະເຢຊູ ຫລືເປັນຜູ້ທີ່ໄດ້ຮັບການມອບໝາຍອອກໄປປະກາດເຣື່ອງຂອງພຣະເຢຊູຄຣິດ.
3. ຕາມປົກຕິອັຄສາວົກຈະມີອຳນາດເໜືອພວກເຖົ້າແກ່, ແລະອາຈານປະຈຳໂບດທົ່ວໄປ.

ຄ. ເຖິງ: ຕີໂມທຽວທີ່ຮັກຂອງເຮົາ ຄວນຈະຂຽນວ່າ ເຖິງ ຕີໂມທຽວລູກທີ່ຮັກຂອງເຮົາ ອີງຕາມພາສາຕົ້ນເດີມ.

1. ໂປໂລຮ້ອງວ່າລູກເພາະເພິ່ນຮັກຕີໂມທຽວຄືລູກ.

2. ໂປໂລຮ້ອງວ່າລູກເພາະວ່າເພິ່ນເປັນຜູ້ນຳຕີໂມທຽວຮັບເຊື່ອແລະໃຫ້ບັບຕິສະມາດ້ວຍມືເພິ່ນເອງ.

ງ. ໂປໂລຂອບພຣະຄຸນພຣະເຈົ້າທີ່ໄດ້ເລືອກຕີໂມທຽວໃຫ້ຮັບຄວາມລອດພົ້ນ ແລະຍັງກາຍມາເປັນຜູ້ຮັບໃຊ້ອີກ

<u>ຂອບພຣະຄຸນດ້ວຍຄວາມເຊື່ອ</u> 1:3-5

ກ. *ເຮົາລະນຶກເຖິງເຈົ້າຢູ່ສເມີໃນການອ້ອນວອນແລະທູນຂໍ ທັງກາງວັນແລະກາງຄືນ* ແປວ່າທຸກເທື່ອທີ່ຄິດຮອດເພິ່ນກໍອ້ອນວອນ.

ຂ. ໂປໂລຂອບພຣະຄຸນທີ່ເຮັດໃຫ້ເພິ່ນມີໃຈສຳນຶກຜິດແລະຊອບ ແປວ່າ ຮູ້ວ່າອັນໃດເປັນນ້ຳພຣະທັຍພຣະເຈົ້າ ແລະຮູ້ວ່າບໍ່ແມ່ນນ້ຳພຣະທັຍ, ພວກປູ່ຍ່າຕາຍາຍຂອງເພິ່ນໄດ້ຮູ້ຈັກສຳນຶກຜິດແລະຊອບມາແລ້ວ ເພິ່ນກໍຣຽນຕາມແບບຢ່າງປູ່ຍ່າຕາຍາຍ.

ຄ. ໂປໂລອ້ອນວອນເພື່ອຕີໂມທຽວທັງກາງເວັນແລະກາງຄືນເພື່ອຕີໂມທຽວຈະມີກຳລັງແລະອົດທົນຕໍ່ບັນຫາຕ່າງໆ

ງ. ໃນຂະນະທີ່ຢູ່ໄກຈາກຕີໂມທຽວເພິ່ນຍັງຄິດເຫັນຕີໂມທຽວຮ້ອງໃຫ້ກ່ອນຈາກກັນທີ່ເມືອງເອເຟໂຊ.

ຈ. ໂປໂລວາງໃຈເພາະເຫັນຄວາມເຊື່ອຂອງຕີໂມທຽວມາແຕ່ສມັຍຂອງນາງໂອລີຜູ້ເປັນແມ່ເຖົ້າ ແລະນາງຢູນີເກຜູ້ເປັນແມ່ ເປັນຕົວຢ່າງ.

<u>ແນະນຳຕີໂມທຽວມີ 5 ຢ່າງ</u> 1:6-14

1. **<u>ຢ່າຢ້ານ</u>** ແຕ່ໃຫ້ລຸກຮຸ່ງເຮືອງຂຶ້ນໃໝ່ ໝາຍຄວາມວ່າເລົ້າໂລມໃຈບໍ່ໃຫ້ຢ້ານໃນການປະກາດ, ບໍ່ໃຫ້ຢ້ານພວກຄຣູສອນປອມ, ບໍ່ໃຫ້ຢ້ານໃນຖະນະທີ່ບໍ່ມີໂປໂລຢູ່ນຳ ແຕ່ໃຫ້ລຸກຮຸ່ງເຮືອງເໝືອນທວນໄຟໃຫຍ່ທີ່ນຳແສງສະວ່າງໄປທົ່ວທຸກແຫ່ງ.

ຂ. **<u>ຢ່າອາຍ,</u>** ການຢູ່ຮ່ວມກັນ15 ປີບາງທີໂປໂລອາດຈະຮູ້ວ່າຕີໂມທຽວເປັນຄົນມັກອາຍ.

3. **<u>ຈົ່ງອົດທົນ</u>**. ໂປໂລເອົາເພິ່ນເປັນຕົວຢ່າງໃນການອົດທົນ ເພາະໂປໂລມີຄວາມເຊື່ອໝັ້ນວ່າພຣະເຈົ້າຈະປົກປັກຮັກສາເພິ່ນຈົນເຖິງວັນພິພາກສາ.

4. **<u>ປະຕິບັດຕາມຫລັກການ,</u>** ເຮັດຕາມແບບຢ່າງທີ່ໂປໂລໄດ້ພາເຮັດຢ່າງມີຫລັກການຂອງພຣະເຈົ້າ ບໍ່ແມ່ຫລັກການຂອງມະນຸດ

5. **<u>ຮັກສາຂອງປະທານ,</u>** ຂອງປະທານທີ່ພຣະເຈົ້າມອບໃຫ້ຄືຂ່າວປະເສີດເຣື່ອງຂອງພຣະເຢຊູຄຣິດຈົ່ງຮັກສາໄວ້ໂດຍການສິດສອນຕາມຫລັກແຫ່ງຄວາມຈິງ ແລະສອນກັນຕໍ່ໄປເລື້ອຍໆ.

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*

## ຄຳແນະນຳສຳລັບຄຣູສອນ

## ບົດຮຽນທີ 8

## ດຳເນີນຊີວິດດ້ວຍຈຸດປະສົງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ຕີໂມທຽວ 2: 1-17, 20-23

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** 2 ຕີໂມທຽວ 2

**ຈຸດສຳຄັນຂອງບົດຮຽນນີ້:** ຊີວິດຂອງພວກເຮົາຈະມີຄວາມໝາຍຫລາຍຂຶ້ນສຳລັບເຮົາເອງແລະຜູ້ອື່ນຖ້າພວກເຮົາຕັ້ງໃຈໃສ່ເຣື່ອງການຮັບໃຊ້ພຣະຄຣິດຢ່າງດຽວ.

**ຄຳຖາມເພື່ອການສຳຣວດ:** ຊີວິດຂອງທ່ານສຸມໃສ່ເຣື່ອງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີທາງທີ່ຈະໃຫ້ພຣະຄຣິດເປັນຈຸດຮວມຂອງຊີວິດຂ້ອຍ.

### ແຜນສຳລັບການສອນ

**ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ຂຽນຄຳວ່າ "ໃຈດຽວ" ໃສ່ກະດານ. ອະທິບາຍຄຳເວົ້າຄຳນີ້ໂດຍສະເພາະໃຫ້ບອກເຖິງ "ການເດັດດ່ຽວ, ຄວາມຊື່ສັດ, ການຕັ້ງໃຈໃສ່ສິ່ງດຽວ." ແນະນຳບົດຮຽນນີ້ນີ້ແລະບອກເຖິງຄຳສັ່ງຂອງໂປໂລສຳລັບຕີໂມທຽວໃນເຣື່ອງການຕັ້ງໃຈສຸມໃສ່ພຣະເຢຊູຢ່າງດຽວ.

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

2. ກ່ອນມື້ຮຽນໃຫ້ຕຽມໂປສເຕີນຶ່ງໃບ ແລະໃຫ້ຂຽນຫົວຂໍ້ບົດຮຽນໃສ່ເພື່ອຈະນຳມາຕິດຕໍ່ໜ້າກະດານ:
    1. ຈົ່ງເຂັ້ມແຂງຢູ່ໃນພຣະຄຣິດ (2:1-7)
    2. ຈົ່ງລະນຶກເຖິງພຣະເຢຊູຄຣິດ (2:8-13)
    3. ຈົ່ງລະວັງຄວາມເວົ້າຂອງທ່ານ (2:14-17)
    3. ຈົ່ງເປັນພາຊນະທີ່ມີກຽດແລະບໍຣິສຸດ (2:20-23)

ພານັກຮຽນເບິ່ງ 2 ຕີໂມທຽວ 2:1-7. ໃຫ້ແຕ່ລະຄົນອ່ານຢ່າງງຽບໆ ແລະໃຫ້ສົມມຸດວ່າໂປໂລກຳລັງເວົ້າກັບເຂົາເຈົ້າແຕ່ລະຄົນ. ຖາມ: ໃນຂໍ້ 1-2, ມີຫຍັງແດ່ສອງຢ່າງທີ່ໂປໂລໄດ້ສັ່ງຕີໂມທຽວ? (ຈົ່ງເຂັ້ມແຂງຂຶ້ນດ້ວຍພຣະຄຸນຊຶ່ງມີຢູ່ໃນພຣະຄຣິດຄືພຣະເຢຊູ, ຈົ່ງມອບຄຳສອນໃຫ້ຄົນທີ່ຊື່ສັດ). ຖາມ: ເປັນຫຍັງຄຳສັ່ງນີ້ຈຶ່ງສຳຄັນສຳລັບພວກເຮົາໃນສມັຍນີ້? ເບິ່ງຕົວຢ່າງເຣື່ອງທະຫານ, ນັກກິລາ, ແລະຊາວນາ (2 ຕມທ 2:3-7). ບອກວ່າຊີວິດຄຣິສຕຽນປະກອບດ້ວຍການເສັຽສະລະ, ການມີຣະບຽບ, ແລະການເຮັດວຽກໜັກ. ຖາມ: ໃນສາມຢ່າງທີ່ກ່າວມານີ້,ທ່ານຕ້ອງການຈະເອົາສິ່ງໃດເປັນຫລັກ?

3. ໃຫ້ຜູ້ນຶ່ງອ່ານ 2:8-13. ຖາມ: ມີຫຍັງອີກແດ່ທີ່ໂປໂລຊັກຊວນຕີໂມທຽວໃຫ້ເຮັດ? (ຈົ່ງລະນຶກເຖິງພຣະເຢຊູຄຣິດ). ມີຄວາມຈິງສອງຢ່າງສຳຄັນກ່ຽວກັບພຣະເຢຊູຄຣິດໃນຕອນນີ້. ຖາມ: ມີຫຍັງແດ່? (ການຄືນພຣະຊົນ ແລະການກຳເນີດ). ບອກທຸກຄົນວ່າ ໂປໂລເຄີຍຖືກຈຳຄຸກ, ຖືກທຸບຕີ, ແລະຖືກຂົ່ມເຫງເພາະຄວາມເຊື່ອ. ຖາມ: ທ່ານເຄີຍຖືກຂົ່ມຂູ່ບໍ່ ເພາະໄດ້ເວົ້າເຣື່ອງພຣະຄຣິດ? ທ່ານແກ້ໄຂຢ່າງໃດ?

4. ອ່ານ 2:14-17. ໃນຕອນນີ້ໂປໂລໄດ້ເວົ້າເຖິງພວກທີ່ເບິ່ງຂ່າວປະເສີດໄປໃນທາງຜິດ ແລະທ່ານຮູ້ວ່າຕີໂມທຽວຈະຕໍ່ສູ້ສິ່ງເຫລົ່ານັ້ນ. "ການຜິດຖຽງກັນດ້ວຍຂໍ້ຄວາມຕ່າງໆ" ຈະເປັນອຸປສັກຕໍ່ການເປັນພຍານເຣື່ອງພຣະຄຣິດ. ຖາມ: ທ່ານເຄີຍຮູ້ຄຣິສຕະຈັກທີ່ມີການແຕກແຍກກັນ ເພາະການກ່າວຂວັນກັນໃນກຸ່ມສະມາຊິກບໍ່? ເປົ້າໝາຍຂອງໂປໂລຄືການ ຕັ້ງໃຈໃສ່ຄວາມຊື່ສັດຕໍ່ພຣະຄຣິດແລະຂ່າວປະເສີດ. ຖ້າຈິດໃຈພວກເຮົາສຸມໃສ່ເຣື່ອງນີ້ ຈນຜິດຖຽງກັນຈະຫາຍໄປ.

5. ໃຫ້ຜູ້ນຶ່ງອ່ານ 2:20-23. ບອກວ່າໂປໂລໄດ້ໃຊ້ຕົວຢ່າງທີ່ໜ້າສົນໃຈເພື່ອອະທິບາຍສະພາບຂອງຄຣິສຕະຈັກ. ຄຣິສຕະຈັກປະກອບດ້ວຍສະມາຊິກ ຊຶ່ງປຽບທຽບໃສ່ພາຊນະໃນເຮືອນຫລັງໃຫຍ່ຫລັງນຶ່ງ. ໃນຂະນະທີ່ພວກເຮົາເຊື່ອວ່າຄຣິສຕຽນທຸກຄົນ ມີຄວາມສເມີພາບກັນ, ໂປໂລໄດ້ສະແດງໃຫ້ເຫັນຢ່າງແຈ່ມແຈ້ງວ່າ ລຳດັບຂອງຜູ້ເຊື່ອແມ່ນຂຶ້ນກັບວິນັຍຂອງແຕ່ລະບຸກຄົນ. ຖາມ: ແມ່ນຫຍັງແດ່ໃນທາງລົບທີ່ໂປໂລໄດ້ເຕືອນຕີໂມທຽວໃຫ້ຫລີກເວັ້ນ? ມີສິ່ງໃດທີ່ທ່ານແນະນຳໃຫ້ຕີໂມທຽວຕິດຕາມໄວ້?

<u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ໃຫ້ທຸກຄົນເບິ່ງຫົວຂໍ້ບົດຮຽນໃນກະດານ. ຂຽນຄຳວ່າ "ໃຈດຽວ" ໃສ່ເບື້ອງໜ້າ. ທົບທວນບົດຮຽນໂດຍເວົ້າວ່າ: ຖ້າພວກເຮົາຢາກມີຈິດນຶ່ງໃຈດຽວໃນການຮັບໃຊ້ພຣະຄຣິດ ພວກເຮົາຈະຕ້ອງ (1) ເຂັ້ມແຂງໃນພຣະອົງ; (2) ລະນຶກເຖິງພຣະຄຣິດ ແລະຂ່າວປະເສີດ; (3) ໃຫ້ທຸກຄຳທີ່ເຮົາເວົ້າຖວາຍກຽດພຣະຄຣິດ; ແລະ (4) ດຳເນີນຊີວິດຢ່າງບໍຣິສຸດ ແລະຢ່າບົ່ມຄວາມບາບໄວ້. ປິດການຮຽນດ້ວຍການອ້ອນວອນເພື່ອຊີວິດຂອງພວກເຮົາໃຫ້ສຸມໃສ່ການຮັບໃຊ້ພຣະຄຣິດຢ່າງດຽວ.

*ສຈ. ດຣ. ສິດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ຕໍ່ສູ້ອຸປສັກຂອງຄວາມເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຂ ຕີໂມທຽວ 3:1-5, 10-17
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ຂ ຕີໂມທຽວ 3
**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອພົບອຸປສັກຂອງຄວາມເຊື່ອ, ຈົ່ງມີຄວາມກ້າຫານໂດຍອາສັຍຕົວຢ່າງຂອງຄຣິສຕຽນຜູ້ຊື່ສັດ ແລະຈົ່ງດຳເນີນຊີວິດຕໍ່ໄປຕາມບົດຮຽນ ທີ່ໄດ້ຮຽນຮູ້ຈາກພຣະຄັມພີ.
**ຄຳຖາມເພື່ອການສຳຣວດ:** ພວກເຮົາມີຫຍັງແດ່ເພື່ອຊ່ວຍເຫລືອ ເວລາພວກເຮົາພົບອຸປສັກຂອງຄວາມເຊື່ອ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີທາງຕໍ່ສູ້ກັບອຸປສັກຂອງຄວາມເຊື່ອ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເລີ້ມການສຶກສາພຣະທັມມື້ນີ້ໂດຍການນຳເຣື່ອງຕໍ່ໄປນີ້ມາເວົ້າໃຫ້ນັກຮຽນຟັງ. ທ່ານອາດຈະພິມເຣື່ອງນີ້ໃສ່ເຈັ້ຽຕ່າງຫາກ ແລະກອບປີຢາຍໃຫ້ພວກນັກຮຽນ ຫລືບໍ່ດັ່ງນັ້ນກໍອ່ານໃຫ້ກັນຟັງ ແລະບອກເຂົາເຈົ້າວ່າ ຈະພິຈາຣະນາເຣື່ອງນີ້ພາຍຫລັງ.

> ໂທມາເປັນນັກຂຽນໂປຣແກມສຳລັບຄອມພິວເຕີໃນບໍຣິສັດ ແລະລາວໄດ້ເດີນທາງໄປຕ່າງເມືອງຢູ່ຕລອດເວລາ. ໂທມາເປັນຄຣິສຕຽນແຕ່ສມັຍຍັງນ້ອຍແລະໄດ້ຮັບບັບຕິສມາຢູ່ໃນໂບດ; ແຕ່ຄອບຄົວຂອງລາວໄປໂບດແບບບໍ່ສມ່ຳສເມີ. ລະຍະທີ່ໄປທຸຣະຢູ່ຕ່າງເມືອງໂທມາໄດ້ຮູ້ກັບຊາຍຄົນນຶ່ງຊື່ວຢູ່ໃນວັຍດຽວກັນ. ເພື່ອນຄົນນີ້ກໍຊວນລາວໄປທ່ຽວສະຖານທີ່ບັນເທີງ (ບາ). ພວກເຂົາພາກັນດື່ມເບັຽ ແລະໝູ່ຂອງລາວຍັງເອົາກັນຊາໃຫ້ໂທມາສູບ. ໂທມາໄດ້ສະແດງກິຣິຍາບໍ່ດີ ຈົນຄົນບໍຣິການໃນບານັ້ນໄດ້ໄລ່ລາວອອກຈາກສະຖານທີ່ນັ້ນ. ແຕ່ນັ້ນມາ ໂທມາເກີດມີຄວາມໂມໂຫໃຫ້ກັບຕົວເອງ ແລະບໍ່ຮູ້ຈະເຮັດແນວໃດ. ໂທມາຈຶ່ງມາພົບທ່ານເພື່ອຂໍຄຳແນະນຳຈາກທ່ານ ວ່າເຂົາຈະເຮັດແນວໃດດີໃນເຣື່ອງທີ່ເກີດຂຶ້ນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ຂຽນ "ຄາວສຸດທ້າຍ" ໃສ່ກະດານ. ຖາມນັກຮຽນວ່າພວກເຂົາເຈົ້າຄິດຫາເຣື່ອງໃດເວລາເຫັນຄຳເວົ້າຄຳນີ້. ໃຫ້ເວລາເພື່ອຕອບ. ເວົ້າໃຫ້ນັກຮຽນຟັງເຣື່ອງຄວາມເຊື່ອຂອງຄຣິສຕຽນໃນສມັຍແລກກ່ຽວກັບເຣື່ອງ "ຄາວສຸດທ້າຍ" ໃຊ້ບົດຮຽນໃນຫົວຂໍ້ "ທາງຊົ່ວຊ້າໃນຄາວສຸດທ້າຍ (3:1-5)."

3. ຕໍ່ຈາກຄຳວ່າ "ຄາວສຸດທ້າຍ" ທີ່ຢູ່ໃນກະດານ, ໃຫ້ຂຽນ "ທາງຊົ່ວຊ້າ..." ຂໍໃຫ້ຄົນນຶ່ງອ່ານ ຂ ຕີໂມທຽວ 3: 1-5. ໂປໂລເຕືອນຕີໂມທຽວກ່ຽວກັບຄົນພວກບໍ່ດີ. ຖາມ: ໂປໂລສັ່ງຕີໂມທຽວແນວໃດແດ່? ທ່ານເຄີຍໄດ້ເຫັນຄວາມຊົ່ວຊ້າປະເພດນີ້ຢູ່ໃສ? ທ່ານຄິດວ່າແມ່ນຫຍັງຄືສິ່ງທີ່ທ້າທາຍຄຣິສຕຽນທີ່ສຸດໃນປັດຈຸບັນ?

4. ຂຽນຫົວຂໍ້ນີ້ໃສ່ກະດານ "ຕົວຢ່າງທີ່ຄວນເຮັດຕາມ (3:10-13)." ໃຫ້ຄົນນຶ່ງອ່ານ 3:10-13. ບອກວ່າ ໂປໂລມີ

ຄວາມສັມພັນແບບໃກ້ຊິດກັບຕີໂມທຽວ. ຖາມ: ມີໃຜແດ່ທີ່ຊ່ວຍທ່ານໃຫ້ດຳເນີນຊີວິດຄຣິດສຕຽນຢ່າງຖືກຕ້ອງ? ຕີໂມທຽວສາມາດເປັນພຍານເຖິງຄວາມຊື່ສັດແລະຄວາມສມ່ຳສເມີໃນຊີວິດຂອງໂປໂລ ບໍ່ວ່າເພິ່ນຈະຢູ່ໃນສະພາບໃດໆ. ຖາມ: ທ່ານເຄີຍຖືກຂົ່ມເຫງເພາະຄວາມເຊື່ອຂອງທ່ານບໍ່? ທ່ານຕອບຮັບແນວໃດຕໍ່ການຂົ່ມເຫງ?

5. ໃຫ້ຄົນນຶ່ງອ່ານ 3: 14-17. ແນະນຳສິ່ງສຳຄັນສາມຢ່າງໃນພຣະທັມນີ້ທີ່ຈະສາມາດຊ່ວຍຄຣິສຕຽນໃຫ້ຕໍ່ສູ້ກັບອຸປສັກຂອງຄວາມເຊື່ອ.

- ນຶ່ງ, ຕີໂມທຽວໄດ້ຮຽນຮູ້ເຣື່ອງຂ່າວປະເສີດຈາກຄຳສອນແລະຕົວຢ່າງຂອງໂປໂລ ແລະຈາກຄຳສອນແລະຕົວຢ່າງຂອງແມ່ ແລະແມ່ຕູ້ຂອງລາວ. ຖາມ: ທ່ານໄດ້ດຳເນີນຊີວິດເພື່ອເປັນຕົວຢ່າງໃຫ້ຄົນອື່ນທາງດ້ານຄວາມເວົ້າແລະການປະພຶດບໍ່?
- ສອງ, ໂປໂລໄດ້ເຕືອນຕີໂມທຽວວ່າທ່ານໄດ້ຕັ້ງໝັ້ນໃນຄວາມເຊື່ອຕໍ່ພຣະເຢຊູຄຣິດ. ຖາມ: ທ່ານໄດ້ຂອບພຣະຄຸນພຣະເຈົ້າເລື້ອຍໆບໍ່ ສຳລັບບຸກຄົນທີ່ໄດ້ນຳທ່ານໃຫ້ມາຮູ້ກັບພຣະເຢຊູຄຣິດ?
- ສາມ, ຕີໂມທຽວມີພຣະທັມຂອງພຣະເຈົ້າເພື່ອຊ່ວຍລາວ. ຖາມ: ທ່ານໄດ້ໃຊ້ເວລາແຕ່ລະມື້ກັບພຣະເຈົ້າບໍ່, ທ່ານໄດ້ອ່ານພຣະທັມເປັນປະຈຳບໍ່? ແລະທ່ານໄດ້ຂໍໃຫ້ພຣະເຈົ້າຊົງເວົ້າກັບທ່ານບໍ່?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ກັບໄປເບິ່ງເຣື່ອງໃນຂໍ້ 1 (ເຣື່ອງຂອງໂທມາ). ຖາມ: ທ່ານໄດ້ໃຫ້ຄຳປຶກສາແນວໃດແດ່ກັບໂທມາຜູ້ຊຶ່ງໄດ້ຜິດພາດໃນຊີວິດຂອງຄວາມເຊື່ອ? ຄຣິສຕຽນສາມາດໄປຫາໃຜແດ່ ເວລາພົບພໍ້ກັບການທົດລອງ? ພວກເຮົາຈະສະແດງໃຫ້ຄົນອື່ນເຫັນໄດ້ແນວໃດວ່າພຣະເຈົ້າຊົງເວົ້າກັບພວກເຮົາຜ່ານພຣະທັມ ແລະພຣະທັມກໍເປັນສິ່ງນຳພາຊີວິດແລະການຮັບໃຊ້ຂອງພວກເຮົາ? ປິດການຮຽນດ້ວຍການອ້ອນວອນຂໍໃຫ້ພວກເຮົາມີຄວາມຊື່ສັດຕໍ່ພຣະເຈົ້າເວລາເຮົາພົບພໍ້ກັບອຸປສັກຂອງຄວາມເຊື່ອ.

*ສຈ. ດຣ. ສີດນີ ຄານ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 10

# ຜູ້ໃຫ້ ແລະຜູ້ຮັບມໍຣະດົກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ຕີໂມທຽວ 4:1-8

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** 2 ຕີໂມທຽວ 4

**ຈຸດສຳຄັນຂອງບົດຮຽນນີ້:** ມໍຣະດົກທີ່ຫລາຍຄົນໄດ້ໃຫ້ໄວ້ ແລະທີ່ພວກເຮົາໄດ້ຮຽນຮູ້ຈະສົ່ງເສີມຊີວິດຄຣິສຕຽນ ແລະການຮັບໃຊ້ຂອງພວກເຮົາ.

**ຄຳຖາມເພື່ອການສຳຣວດ:** ທ່ານຈະໃຫ້ມໍຣະດົກແນວໃດແດ່? ທ່ານກຳລັງເຮັດຕາມມໍຣະດົກອັນໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍມໍຣະດົກທີ່ຂ້ອຍໄດ້ຮັບຜົນປໂຍດຈາກ ແລະສລູບມໍຣະດົກທີ່ຂ້ອຍຕ້ອງການຖ່າຍທອດໄວ້ໃຫ້ຄົນອື່ນຕໍ່ໄປ?

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖາມ: ພວກທ່ານຄິດຫາຫຍັງແດ່ເວລາໄດ້ຍິນຫລືໄດ້ເຫັນຄຳວ່າ "ມໍຣະດົກ"? ອະທິບາຍວ່າມໍຣະດົກແມ່ນຫຍັງ? ອະທິບາຍວ່າມື້ນີ້ພວກເຮົາຈະສຶກສາເຣື່ອງມໍຣະດົກຝ່າຍຈິດວິນຍານທີ່ພວກເຮົາຈະປະໄວ້ໃຫ້ກັບຄົນອື່ນໆ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ໃຫ້ຂຽນຂໍ້ຄວາມຂອງໂປໂລໃສ່ໂປສເຕີ້ໄວ້ລ່ວງໜ້າ. ຕັດເຈັ້ຽເປັນແຜ່ນໆເພື່ອປົກຂໍ້ຄວາມແຕ່ລະຂໍ້ໄວ້ຊົ່ວຄາວ.
   (1) "ຕໍ່ພຣະພັກພຣະເຈົ້າ ແລະຕໍ່ພຣະພັກພຣະເຢຊູຄຣິດ"
   (2) "ຈົ່ງປະກາດພຣະທັມ"
   (3) "ຄຳສອນອັນມີຫລັກ"
   (4) "ຈົ່ງປະຕິບັດໜ້າທີ່ການຂອງເຈົ້ານັ້ນໃຫ້ສຳເຣັດ"

ບອກວ່າ ພວກເຮົາຈະພິຈາຣະນາເບິ່ງຂໍ້ຄວາມເຫລົ່ານີ້ໃນເວລາສຶກສາພຣະທັມ 2 ຕີໂມທຽວ 4:1-8.

3. ໃຫ້ຜູ້ນຶ່ງອ່ານ 2 ຕີໂມທຽວ 4:1-5. ເອົາເຈັ້ຽປົກແຜ່ນທຳອິດອອກ ແລະບອກວ່າ, ຄຳສັ່ງຄຳສຸດທ້າຍຂອງໂປໂລສຳລັບຕີໂມທຽວທີ່ເຮົາເບິ່ງນີ້ເປັນຄຳສັ່ງທີ່ສຳຄັນແລະສັກສິດຫລາຍ. ໂປໂລຮູ້ວ່າພຣະເຈົ້າຊົງຢູ່ທ້າມກາງພວກເຂົາ. ທ່ານບອກວ່າ "ຕໍ່ພຣະພັກພຣະເຈົ້າແລະຕໍ່ພຣະພັກພຣະເຢຊູຄຣິດ" (4:1). ຖາມ: ທ່ານຄິດວ່າເປັນຫຍັງໂປໂລໃຊ້ຄວາມເວົ້ານັ້ນໃນຕອນນີ້?

4. ເອົາເຈັ້ຽປົກແຜ່ນທີສອງອອກ. ບອກວ່າ "ຈົ່ງປະກາດພຣະທັມ" ໝາຍເຖິງເປັນຜູ້ນຳພຣະທັມອອກໄປ. ຖາມ: ທ່ານຄິດວ່າໂປໂລເວົ້າເຖິງຫຍັງໃນຂໍ້ທີ 2: "ຈົ່ງເອົາໃຈໃສ່ເຮັດການທັງໃນເວລາມີໂອກາດແລະບໍ່ມີໂອກາດ"? ອະທິບາຍວ່າໂປໂລອາດຈະເວົ້າເຖິງໂອກາດຕ່າງໆທີ່ພວກເຮົາສາມາດປະກາດພຣະທັມ (ໃຊ້ບົດຮຽນຊ່ວຍ). ຖາມ: ພຣະທັມຂໍ້ນີ້ເວົ້າກັບທ່ານແນວໃດແດ່ ກ່ຽວກັບເຣື່ອງການເປັນພຍານເຣື່ອງພຣະຄຣິດ?

5. ເອົາເຈັ້ຽປົກອັນທີສາມອອກ. ອະທິບາຍ, ສໍາລັບໂປໂລ, "ຄໍາສອນອັນມີຫລັກ" ແມ່ນຂ່າວປະເສີດທີ່ນໍາໄປສູ່ຄວາມເປັນອັນນຶ່ງອັນດຽວກັນ ແລະຄວາມຮັກ. ໂບດສາມັກຄີເປັນໂບດທີ່ມີຄວາມຮັກ ແລະຫ່ວງໃຍຊຶ່ງກັນແລະກັນ ແລະຄົນທີ່ຍັງຫລົງທາງຢູ່. ຫລາຍຄົນອາດຈະສແວງຫາຄໍາສອນທີ່ຖືກຫູຕົວເອງ;
ໂປໂລບອກວ່າພວກເຂົາຈະຫັນຈາກຄວາມຈິງ ແລະໄປຕິດຕາມເຣື່ອງນິຍາຍ. ຖາມ: ທ່ານເຄີຍໄດ້ຍິນຄົນຕໍານິອາຈານແລະການນະມັສການບໍ່? ທ່ານຄິດວ່າຄົນພວກ ນີ້ມີເຣື່ອງອື່ນແນວໃດບໍ່ທີ່ຊ້ອນຢູ່ໃນໃຈ? ມີຄວາມຄິດຜິດແນວໃນແດ່ທີ່ທ່ານເຫັນແອບແຝງຢູ່ໃນການສອນພຣະທັມໃນທຸກມື້ນີ້?

6. ເອົາເຈັ້ຽປົກແຜ່ນທີສີ່ອອກ ແລະກ່າວວ່າ ໂປໂລໄດ້ເຕືອນຕີໂມທຽວເຖິງຄວາມທຸກລໍາບາກທີ່ຈະເກີດຂື້ນໃນການປະກາດພຣະທັມ ແລະການຮັບໃຊ້ພຣະເຈົ້າໃຫ້ສໍາເຣັດ. ຖາມ: ພຣະເຈົ້າຊົງໃຫ້ທ່ານເຮັດຫຍັງ? ເຕືອນວ່າພຣະເຈົ້າຊົງໃຫ້ຂອງປະທານກັບຄຣິສຕຽນທຸກຄົນເພື່ອການຮັບໃຊ້ (1 ກຣທ 12:4-11) ແລະພຣະອົງຊົງປະສົງໃຫ້ທຸກຄົນໃຊ້ຂອງປະທານເຫລົ່ານັ້ນເພື່ອການຮັບໃຊ້.

7. ໃຫ້ຜູ້ນຶ່ງອ່ານ 4:6-8. ເອົາເຈັ້ຽປົກໃບສຸດທ້າຍອອກຈາກໂປສເຕີ້. ບອກວ່າ ໂປໂລຮູ້ເວລາສໍາລັບການຈາກໄປຂອງທ່ານໄດ້ມາໃກ້ແລ້ວ. ທ່ານໄດ້ແຂ່ງຂັນຈົນເຖິງທີ່ສຸດແລ້ວ ແລະທ່ານໄດ້ຮັກສາຄວາມເຊື່ອໄວ້ແລ້ວ. "ພວງມາລັຍແຫ່ງຄວາມຊອບທັມ" ໄດ້ລໍຖ້າທ່ານຢູ່. ຖາມ: ທ່ານເຫັນຄວາມຕື່ນເຕັ້ນຂອງໂປໂລບໍ່ ໃນການທີ່ຈະກັບໄປບ້ານທີ່ຟ້າສວັນ?

## ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

8. ສລູບໂດຍບອກວ່າ ພວກເຮົາໄດ້ເບິ່ງມໍຣະດົກທີ່ໂປໂລໄດ້ປະໄວ້. ຖາມ: ມໍຣະດົກນີ້ມີຄວາມໝາຍຫຍັງແດ່ສໍາລັບພວກເຮົາໃນສມັຍນີ້? ທ່ານມີຫຍັງແດ່ທີ່ຈະເວົ້າກ່ອນທ່ານຈະຈາກໂລກນີ້ໄປ? ປິດການສຶກສາດ້ວຍການອ້ອນວອນຂອບຄຸນພຣະເຈົ້າສໍາລັບມໍຣະດົກທີ່ຕົກທອດມາເຖິງພວກເຮົາແລະອ້ອນວອນຂໍໃຫ້ພຣະເຈົ້າຊົງຊ່ວຍ ແລະໜູນໃຈພວກເຮົາໃຫ້ປະມໍຣະດົກຝ່າຍຈິດວິນຍານໄວ້ໃຫ້ຄົນອື່ນໆຕໍ່ໄປ.

*ສຈ. ດຣ. ສີດາ ຄານ*

## ບົດແນະນຳຄຣູສອນ
## ບົດຮຽນທີ 11
## ການຢູ່ກິນໂດຍຄວາມເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຕີໂຕ 2:1-14
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ຕີໂຕ 2:1-15; 1 ຕີໂມທຽວ 5:1--6:2
**ຈຸດສຳຄັນຂອງບົດຮຽນນີ້:** ການມີຊີວິດໃນຄວາມເຊື່ອໃນທຸກສະຖານະການ
**ຄຳຖາມເພື່ອການສຳຣວດ:** ທ່ານຈະມີຊີວິດໃນຄວາມເຊື່ອຢ່າງໃດເມື່ອມີສະຖານະການ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາທາງທີ່ຈະຢູ່ຢ່າງໝັ້ນຄົງໃນເມື່ອມີສະຖານະການ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ຕີໂຕເຊື່ອພຣະເຈົ້າຍ້ອນການປະກາດຂອງໂປໂລ ແລະກາຍເປັນຜູ້ຕິດຕາມຮັບໃຊ້ພຣະເຈົ້າຮ່ວມກັບໂປໂລໃນການປ່າວປະກາດຄັ້ງທີສາມຂອງໂປໂລ ແລະໂປໂລເອງກໍຮັກແພງຕີໂຕຄືລູກຊາຍ ຫລືນ້ອງຊາຍເພິ່ນຈຶ່ງສິດສອນໃຫ້ຕີໂຕໄດ້ຮັບໃຊ້ພຣະເຈົ້າໃນເວລາຕີໂຕມີອາຍຸຍັງບໍ່ເຖິງ 40 ປີ. ຕີໂຕມີສາຍານາມວ່າເປັນສາວົກໜຸ່ມ. ໃນເວລານັ້ນມີພວກຄຣູສອນສາສນາບໍ່ຖືກຕ້ອງຕາມຫລັກຄຳສອນ ໂປໂລຂຽນຈົດໝາຍເຖິງເປໂຕດັ່ງທີ່ເຫັນໃນພຣະທັມຕີໂຕເພື່ອສອນດັ່ງນີ້.

**ຂໍໃຫ້ຜູ້ນຶ່ງອ່ານ 2:1**

1. ໂປໂລເລີ່ມດ້ວຍຄຳວ່າ **ແຕ່ຝ່າຍເຈົ້າ** ໝາຍຄວາມວ່າສຳລັບເຈົ້າເອງຫລືຕີໂຕເອງ ຜູ້ຮັບໃຊ້ພຣະເຈົ້າທີ່ຊົງເລືອກໃຫ້ກາຍເປັນຄົນບໍຣິສຸດ ຈົ່ງສອນພຣະທັມຂອງພຣະເຈົ້າຢ່າງມີຫລັກການ ເຈົ້າຈົ່ງມີຣະບຽບໃນການສອນ, ມີໜ້າທີ່ສະແດງຕົນເປັນຕົວຢ່າງ ຄືຕ້ອງຢູ່ໃນພຣະທັມຂອງພຣະເຈົ້າທຸກປະການ.

2. *ຈົ່ງສັ່ງສອນໃຫ້ເໝາະສົມກັບຄຳສອນອັນມີຫລັກ* ໝາຍຄວາມວ່າໃຫ້ສອນຕາມພຣະທັມຂອງພຣະເຈົ້າໂດຍບໍ່ມີການເພີ້ມຫລືຕັດປະການໃດ, ຢ່າເປັນຄືພວກຄຣູສອນປອມທີ່ສອນພຣະທັມ ແຕ່ຕົນເອງບໍ່ຢູ່ໃນພຣະທັມ.

3. ຈົດໝາຍນີ້ຂຽນໂດຍໂປໂລເພື່ອບອກສອນລູກຮັກ ຫລືນ້ອງຮັກຕີໂຕຜູ້ເປັນຄຣູສອນພຣະທັມປະຈຳທ້ອງຖິ່ນ. ເຮົາທັງຫລາຍກໍເປັນຄຣູສອນພຣະທັມພຣະເຈົ້າໃນໂບດນີ້, ເຮົາຈະເຮັດແນວໃດກັບຄຳສັ່ງໂປໂລນີ້?

**ຂໍໃຫ້ຜູ້ນຶ່ງອ່ານ 2:2-10 ຫລັກຄຳສອນແຕ່ລະເພດວັຍ**

1. " *ຈົ່ງສອນພວກຊາຍທີ່ມີອາຍຸສູງໃຫ້ຮູ້ຈັກບັງຄັບຕົນ, ໃຫ້ເປັນຄົນສະຫງ່າຜ່າເຜີຍ, ເປັນຄົນມີສະຕິຮອບຄອບ, ເປັນຄົນມີຄວາມເຊື່ອ, ມີຄວາມຮັກ, ມີຄວາມອົດທົນຕາມສົມຄວນ* " (ຂໍ້ 2).

2. " *ຝ່າຍພວກຜູ້ຍິງທີ່ມີອາຍຸສູງນັ້ນກໍເໝືອນກັນ ຈົ່ງໃຫ້ເຂົາມີກິຣິຍາສົມກັບເປັນຄົນຂອງພຣະເຈົ້າ ຢ່າໃຫ້ເປັນຄົນໃຊ້ຄໍານິນທາປມາດ ຫລືເປັນຄົນຕິດເຫລົ້າແວງຫລາຍ ແຕ່ໃຫ້ເປັນຜູ້ສອນຄຸນງາມຄວາມດີ ເພື່ອເປັນການແອບສອນພວກຍິງໜຸ່ມໃຫ້ຮັກຜົວແລະລູກຂອງຕົນ ໃຫ້ເປັນຄົນມີສະຕິອັນດີຮອບຄອບ, ເປັນຄົນບໍຣິສຸດ, ເປັນຄົນເອົາໃຈໃສ່ໃນວຽກບ້ານການເຮືອນ, ເປັນຄົນມີໃຈເມຕາ, ແລະເປັນຄົນນ້ອມເຊື່ອຟັງຜົວຂອງຕົນ* <u>*ເພື່ອພຣະທັມຂອງພຣະເຈົ້າຈະບໍ່ຖືກປມາດ*</u> " (ຂໍ້ 3-5).

3. " *ຝ່າຍພວກຊາຍໜຸ່ມກໍເໝືອນກັນ ຈົ່ງຕັກເຕືອນໃຫ້ເຂົາມີສະຕິຮອບຄອບ ຄືເຈົ້າເອງຈົ່ງສະແດງຕົນເປັນແບບຢ່າງໃນການດີທຸກສິ່ງໃນການສອນ, ຈົ່ງສແດງຄວາມສຸຈຣິດໃຈແລະມີໃຈສູງສົ່ງ ແລະໃຊ້ຄໍາເວົ້າອັນມີຫລັກຊຶ່ງບໍ່ມີຜູ້ໃດຈະຕິໄດ້* <u>*ເພື່ອຝ່າຍຜູ້ຂັດຂວາງຈະໄດ້ຮັບຄວາມອັບອາຍ*</u> " (ຂໍ້ 6-8).

4. " *ຈົ່ງຕັກເຕືອນພວກຂ້ອຍຂ້າໃຫ້ເຂົານ້ອມຟັງນາຍຂອງຕົນ ໃຫ້ເຂົາເຮັດໃຫ້ຖືກໃຈນາຍທຸກສິ່ງ ແລະຢ່າໃຫ້ເປັນຄົນຖຽງຄວາມ, ຢ່າໃຫ້ເປັນຄົນລັກໂລບເຊື່ອງບັງສິ່ງໃດ ແຕ່ໃຫ້ສັດຊື່ສຸຈຣິດໃນທຸກສິ່ງ* <u>*ເພື່ອວ່າການທັງປວງນັ້ນເຂົາຈະໄດ້ເທີດທູນພຣະກຣຸດແລະຄໍາສອນ ເຣື່ອງພຣະເຈົ້າຜູ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ*</u> " (ຂໍ້ 9-10).

<u>**ຂໍໃຫ້ຜູ້ນຶ່ງອ່ານ 2:11-14 ເຫດຜົນໃນການປະຕິບັດ**</u>

1. " *ໃຫ້ດໍາເນີນຊີວິດໃນສມັຍນີ້ຢ່າງມີສະຕິອັນດີຮອບຄອບດ້ວຍຄວາມຍຸຕິທັມ ແລະນັບຖືພຣະເຈົ້າຢ່າງຖືກຕ້ອງ* " (ຂໍ້ 12). ເພື່ອຈະບໍ່ຖືກລໍ້ລວງໃຫ້ຫລົງທາງຈາກພຣະເຈົ້າ.

2. ເລົ່າເຣື່ອງມານລໍ້ລວງນາງເອວາ. ພຣະເຈົ້າສັ່ງນາງວ່າ

ກ. " *ໝາກໄມ້ທຸກໆກົກໃນສວນນີ້ເຈົ້າກິນໄດ້ໝົດເວັ້ນໄວ້ ແຕ່ກົກໄມ້ ທີ່ໃຫ້ຄວາມຮູ້ຈັກຄວາມດີແລະຄວາມຊົ່ວເຈົ້າຢ່າກິນ ຖ້າເຈົ້າຂືນກິນໝາກໄມ້ໃນກົກນີ້ ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ* " ມານປີ້ນຄໍາເວົ້າວ່າ " *ຈິງຫລືທີ່ພຣະເຈົ້າຊົງຫ້າມບໍ່ໃຫ້ກິນໝາກໄມ້ໃນສວນນີ້* ".

ຂ. ເອວາເປີດໂອກາດພົວພັນກັບມານ ແລະຕື່ມຄໍາເວົ້າພຣະເຈົ້າວ່າ *ຫລືກະທັ້ງແຕະຕ້ອງເປັນເດັດຂາດ*

<u>**ຄໍາຖາມ:**</u> ໃຫ້ອ່ານຕາມບົດຝຶກຫັດ

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 12
# ເຮັດດີເປັນໜ້າທີ່ຂອງເຮົາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຕີໂຕ 3:1-9
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ຕີໂຕ 3
**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕຽນແທ້ນັ້ນແມ່ນແນໃສ່ເຣື່ອງຊີວິດນິຣັນເປັນສ່ວນໃຫຍ່
**ຄຳຖາມເພື່ອການສຳຣວດ:** ຄຳວ່າຄຣິສຕຽນມີຄວາມໝາຍອັນໃດສຳລັບທ່ານ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອນຳພາຄຣິສຕຽນຝຶກຫັດເອົາຊີວິດນິຣັນເປັນສິ່ງສຳຄັນທີ່ສຸດ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ບົດຮຽນນີ້ແມ່ນບົດສຸດທ້າຍຂອງພຣະທັມຕີໂຕ ແລະໃນຕອນທ້າຍຂອງຈົດໝາຍໂປໂລທີ່ເວົ້າກັບນ້ອງຊາຍຕີໂຕແມ່ນແນະນຳວິທີທາງໃຫ້ຕີໂຕສອນຄຣິສຕຽນທີ່ຢູ່ໃນເກາະຄຣີດໃນການໃຊ້ຊີວິດປະຈຳວັນໃນຖານກາງພວກເຈົ້ານາຍ.

**ຂໍໃຫ້ຜູ້ນື່ງອ່ານ 3:1-2 ເຮັດດີຕໍ່ຄົນພາຍນອກ**

ກ. *ເຕືອນສະຕິໃຫ້ຢູ່ໃຕ້ບັງຄັບຜູ້ປົກຄອງແລະຜູ້ມີອຳນາດ* ແປວ່າຢ່າລືມໂຄຣົບນັບຖືກົດໝາຍບ້ານເມືອງ, ຢ່າຕໍ່ສູ້ຜູ້ມີອຳນາດ.

ຂ. ພຣະທັມໂຣມບົດ 13:1 *ດ້ວຍວ່າບໍ່ມີອຳນາດໃດທີ່ບໍ່ໄດ້ມາຈາກພຣະເຈົ້າ*

ຄ. *ມີໃຈພ້ອມທີ່ຈະເຮັດການດີ* ເປັນໜ້າທີ່ຂອງຄຣິສຕຽນຢູ່ແລ້ວ ແລະການດີນັ້ນກາຍເປັນຫົນທາງແຫ່ງຄວາມສັມພັນອັນດີງາມ ສິ່ງເຫລົ່ານີ້ສາມາດເຮັດໃຫ້ຜູ້ປົກຄອງແລະຜູ້ມີອຳນາດເຫັນພຣະເຈົ້າໃນຕົວເຮົາ.

ງ. *ຢ່າໝິ່ນປມາດໃຜຈັກຄົນ* ການໝິ່ນປມາດເປັນການສ້າງສັຕຣູ, ຄວາມຮັກແພງໝົດລົງ, ຄວາມສຳພັນຂາດສະບັ້ນ ຕໍ່ໄປຕ່າງຄົນກໍຕ່າງເວົ້າໝິ່ນປມາດຊຶ່ງກັນແລະກັນ. ເຮົາກໍໝົດໂອກາດເປັນພະຍານຝ່າຍພຣະເຈົ້າ. *"ຖ້າທ່ານຢາກໃຫ້ເຂົາເຮັດຢ່າງໃດ ແກ່ທ່ານ ຈົ່ງເຮັດຢ່າງນັ້ນແກ່ເຂົາເໝືອນກັນ"* (ລູກາ 6:31).

ງ. ໂຣມ 12: 10 *ສ່ວນການທີ່ໃຫ້ກຽດແກ່ກັນແລະກັນນັ້ນ ຈົ່ງຖືວ່າຜູ້ອື່ນດີກວ່າຕົນ* . ເຮັດດັ່ງນີ້ດີກວ່າໝິ່ນປມາດ, ຈົ່ງເຮັດດີຕໍ່ຄົນພາຍນອກ ເມື່ອເຂົາເຫັນຄວາມດີທີ່ທ່ານເຮັດເຂົາອາຈເຊື່ອພຣະເຈົ້າໃນວັນນຶ່ງ.

**ຂໍໃຫ້ຜູ້ນື່ງອ່ານ 3:3-7 ຄຶດເຖິງຕົນເອງ**

ກ. ການຈະໄປເວົ້າຫລືໝິ່ນປມາດພວກຜູ້ປົກຄອງ, ພວກເຈົ້ານາຍນັ້ນ ຫລືໃຜຜູ້ໃດຜູ້ນຶ່ງ ໂປໂລສອນວ່າເມື່ອ

ກ່ອນເຮົາທັງຫລາຍກໍເປັນດັ່ງນັ້ນມາກ່ອນ, ຫາກຈະໄປວ່າເພິ່ນຈຶ່ງຄິດເຫັນຕົນເອງ.

ຂ. ຜົນເສັຽຂອງການໝິ່ນປມາດຜູ້ອື່ນ

1. ເຮົາກໍປມາດຕົນເອງ. 2. ເຮົາລືມຄິດວ່າເຮົາເປັນແນວນັ້ນມາກ່ອນ. 3. ຫາກເຮົາປມາດເພິ່ນໆກໍຈະປມາດເຮົາ 4. ໝົດໂອກາດປະກາດ ເຣື່ອງຣາຊອານາຈັກສວັນກັບລາວອີກ.

ຄ. *"ເປັນສັນໃດທ່ານຈຶ່ງເວົ້າກັບພີ່ນ້ອງຂອງຕົນວ່າພີ່ນ້ອງເອີຍ, ໃຫ້ຂ້ອຍເຂັ່ຽຂີ້ເຫຍື້ອອອກຈາກຕາຂອງເຈົ້າ ແຕ່ທ່ານເອງໄມ້ທັງທ່ອນທີ່ຢູ່ໃນຕາຂອງຕົນ ຍັງບໍ່ເຫັນ "* (ລູກາ 6:42).

ຈ. ເຮົາເຄີຽເປັນຂ້ອຍຂ້າກິເລດຕັນຫາ ແຕ່ບໍ່ຮູ້ວ່າເຮົາເປັນຂ້ອຍຂ້າ ເພາະບາບບັງໄວ້.

ສ. ເມື່ອຊີວິຖືກໂຜດໃຫ້ພົ້ນດ້ວຍພຣະຄຸນຈຶ່ງຮູ້ວ່າເຮົາເອງເປັນຂ້ອຍຂ້າຂອງກິເລດຕັນຫາ (ຂໍ້ 5).

ຊ. ເຮົາກາຍເປັນຄົນຊອບທັມດ້ວຍພຣະຄຸນ (ຂໍ້ 7).

**<u>ຂໍໃຫ້ຜູ້ນຶ່ງອ່ານ 3:8-9 ຄຳແນະນຳທີ່ສຳຄັນ</u>**

ກ. *ຄຳນີ້ເປັນຄຳສັດຈິງ* ທີ່ໂປໂລກ່າວໝາຍຄວາມວ່າເປັນຄຳແນະນຳທີ່ໃຫ້ປະຕິບັດຢ່າງຈິງຈັງ.

ຂ. *ເຮົາປາຖນາໃຫ້ເຈົ້າເນັ້ນໜັກໃນເຣື່ອງນີ້* ແປວ່າເຮົາຢາກໃຫ້ເຈົ້າເຮັດແທ້ໆໃນເຣື່ອງນີ້.

ຄ. *ເພື່ອຄົນທີ່ເຊື່ອໃນພຣະເຈົ້າແລ້ວຈະເອົາໃຈໃສ່ໃນການເຮັດການດີ* ແປວ່າຄຣິສຕຽນຈະຕ້ອງເຮັດການດີເປັນຊີວິດປະຈຳວັນ ແລະຄົນທີ່ເຊື່ອໃນພຣະເຈົ້າຈະຍອມເຊື່ອຟັງຄຳແນະນຳຂອງໂປໂລ.

ງ. *ເຫດສັນນັ້ນຕາມທີ່ມີໂອກາດ* (ຄາລາເຕັຽ 6:10). ແປວ່າໃນຂະນະທີ່ມີຊີວິດຢູ່ຈຶ່ງເຮັດດີ.

ຈ. *ເຈົ້າຈົ່ງເວັ້ນເສັຽຈາກການໂຈດຖຽງກັນຢ່າງໂງ່, ຈາກເຣື່ອງ* ~~ສຳລັບ~~=*(ລຳດັບ)ວົງກະກູນ.* <u>ສຳລັບ</u>ຖືກປ່ຽນມາເປັນ <u>ລຳດັບ</u> ເພື່ອຄວາມສອດຄ່ອງກັບພາສາອື່ນ ແລະຕາມເນື້ອເຣື່ອງ.

ສ. ຄຣິສຕຽນໃນເກາະຄຣີດທີ່ຕີໂຕເປັນອາຈານຢູ່ໄດ້ຖືກຖຽງກັນ ເຣື່ອງລຳດັບເຊື້ອສາຍຂອງບັນພະບຸຣຸດຕລອດເຖິງເຊື້ອສາຍພຣະເຢຊູ ແລະຍັງຖຽງກັນເຣື່ອງພຣະບັນຍັດອີກ, ສິ່ງເຫລົ່ານີ້ໂປໂລຖືວ່າເປັນເຣື່ອງໂງທີ່ຈະນຳມາຖົກຖຽງແລ້ວແຕກແຍກກັນ.

**<u>ຄຳຖາມ:</u>** ໃຊ້ຄຳຖາມໃນບົດຝຶກຫັດ

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*

## ບົດແນະນຳຄຣູສອນ
## ບົດຮຽນທີ 13
## ຂ່າວປະເສີດປ່ຽນໄດ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຟີເລໂມນ
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ຟີເລໂມນ
**ຈຸດສຳຄັນຂອງບົດຮຽນນີ້:** ຂ່າວປະເສີດເປັນພື້ນທາງຄວາມສັມພັນທີ່ຫ່າງຫາຍໃຫ້ຄືນມາ
**ຄຳຖາມເພື່ອການສຳຣວດ:** ເຮົາຈະເຮັດແນວໃດເພື່ອຈະເອົາພຣະເຢຊູເປັນສາຍສັມພັນ
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຕັດສິນໃຈເອົາພຣະເຢຊູເປັນພື້ນທາງແຫ່ງຄວາມສັມພັນ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.

### ແນສຳລັບການສອນ

1. ເລົ່າເຣື່ອງ: ສົມມຸດວ່າມີຄົນຍາກຈົນຜູ້ນຶ່ງມາຂໍອາສາເປັນຄົນຮັບໃຊ້ໃນເຮືອນທ່ານ, ຂໍແຕ່ມີບ່ອນນອນແລະ ມີເຂົ້າກິນແຕ່ລະວັນລາວກໍພໍໃຈ, ບໍ່ນານຕໍ່ມາລາວໄດ້ລັກເຄື່ອງເຮືອນແລ້ວໜີໄປເມືອງອື່ນ ທີ່ນັ້ນລາວພົບກັບພຣະເຈົ້າ ແລະກາຍເປັນຄຣິສຕຽນທີ່ຊື່ສັດແລະເຂັ້ມແຂງຮັບໃຊ້ຊ່ອຍອາຈານໃນໂບດ. ຕໍ່ມາອາຈານຂອງລາວໃຊ້ລາວມາຫາທ່ານ ທ່ານຈະຄິດແນວໃດກັບລາວ? ແລະສົມມຸດວ່າທ່ານເອງເປັນຜູ້ນັ້ນທ່ານຈະກ້າກັບໄປຫາເຈົ້າຂອງບ້ານບໍ່? ໃຫ້ເວລານັກຮຽນຕອບນ້ອຍນຶ່ງ.

2. ບອກນັກຮຽນວ່າ ບົດຮຽນມື້ນີ້ແມ່ນເຣື່ອງຄ້າຍຄືແນວນີ້. ໃຫ້ຄິດເສັຽວ່າທ່ານເອງເປັນຄົນຂອງພຣະເຈົ້າໂດຍກຳເນີດ ແຕ່ບໍ່ໄດ້ເຊື່ອພຣະເຈົ້າ, ຕໍ່ມາທ່ານກໍກັບໃຈຮັບເຊື່ອພຣະເຈົ້າຄືດຽວນີ້ແລ້ວພຣະເຈົ້າອະພັຍໃຫ້ຈົນໝົດສິ້ນ. ບົດຮຽນມື້ນີ້ຈະຊ່ອຍທ່ານເຣື່ອງການໃຫ້ອະພັຍ.

3. ຂໍໃຫ້ຜູ້ນຶ່ງອ່ານ 1-3 ໂປໂລແນະນຳຕົວເອງ

ກ. ຈົດໝາຍບູຮານຈະອອກຊື່ຜູ້ຂຽນແລະຊື່ຜູ້ຮັບ, ຈົດໝາຍສມັຍໃຫມ່ເອົາຊື່ຜູ້ຂຽນໄວ້ນຳຫລັງ. ຕົວຢ່າງເຮົາລົງທ້າຍຈົດໝາຍດ້ວຍຄຳວ່າ ຈາກ..........ຜູ້ເປັນ........

ຂ. ໂປໂລບອກວ່າເພິ່ນເປັນຜູ້ຖືກຈຳຈອງໝາຍຄວາມວ່າ; 1. ເປັນຜູ້ຮັບໃຊ້ຕລອດຊີວິດ. 2. ຖືກຕິດຄຸກຈຳຈອງໃນເວລານີ້ ກໍຍ້ອຍຂ່າວປະເສີດ.

ຄ. ເຖິງຟີເລໂມນເພື່ອນຮ່ວມງານ: ຟີເລໂມນເຊື່ອພຣະເຈົ້າຍ້ອນການປະກາດຂອງໂປໂລ ແລະກາຍເປັນຜູ້ນຳຄຣິສຕຽນໃນຂອບເຂດຂອງເພິ່ນໆເອົາເຮືອນຂອງເພິ່ນເປັນໂບດ ແລະເຮືອນຂອງເພິ່ນເປັນທີ່ພັກເຊົາຂອງ

ໂປໂລ.

ງ. ໂປໂລ *ຂໍພຣະຄຸນແລະສັນຕິສຸກຈາກພຣະບິດາ ເຈົ້າຂອງເຮົາທັງຫລາຍແລະຈາກພຣະເຢຊູຄຣິດເຈົ້າຈົ່ງຢູ່ກັບເຈົ້າທັງຫລາຍເທີ້ນ* " (ຂໍ້ 3). ທຽບໃສ່ເມື່ອກ່ອນເພິ່ນຂອກທຳລາຍຄຣິສຕຽນ ແຕ່ດຽວນີ້ຂໍໃຫ້ມີສັນຕິສຸກ.

## 4. ຂໍໃຫ້ຜູ້ນຶ່ງອ່ານ 4-10 ໂປໂລພໍໃຈຟີເລໂມນ

ກ. *ນ້ອງເອີຍເຮົາມີຄວາມດີໃຈຫລາຍ ແລະໄດ້ຮັບຊູໃຈເພາະຄວາມຮັກຂອງເຈົ້າຈິດໃຈຂອງໄພ່ພົນຂອງພຣະເຈົ້າໄດ້ຊຸ່ມເຢັນຂຶ້ນເພາະເຈົ້າ* " (ຂໍ້ 7). ໂປໂລຮ້ອງຟີເລໂມນວ່ານ້ອງໃນພຣະເຢຊູຄຣິດ, ເພິ່ນດີໃຈໃນຄວາມເຊື່ອແລະການປະຕິບັດຂອງຟີເລໂມນ ດ້ວຍເຫັນລູກສິດເພິ່ນສາມາດນຳຄົນອື່ນໃຫ້ໄດ້ຮັບຄວາມຊຸ່ມເຢັນພາຍໃນຈິດໃຈ.

ຂ. ດ້ວຍຄວາມຮັກໃນຖານພີ່ນ້ອງຄຣິສຕຽນ ໂປໂລບໍ່ສັ່ງການ ແຕ່ຂໍຮ້ອງໃຫ້ຟີເລໂມນເຮັດໃນສິ່ງທີ່ຄວນເຮັດ (ຂໍ້ 10). ເພາະການສັ່ງບໍ່ແມ່ນຫລັກສະນະຂອງຄຣິສຕຽນ.

## 5. ຂໍໃຫ້ຜູ້ນຶ່ງອ່ານ 11-21 ຈຸດປະສົງຂອງຈົດໝາຍ

ກ. ເວົ້າເຣື່ອງຂອງ ໂອເນຊີເມ ອະດີດຂ້າທາດຂອງຟີເລໂມນ (ຂໍ້ 12).

ຂ. ໂປໂລສົ່ງ ໂອເນຊີເມ(ອະດີດຂ້າທາດ) ກັບຄືນຫາ ຟີເລໂມນ (ອະດີດເຈົ້ານາຍ) ຕາມແຜນການຂອງພຣະເຈົ້າໃນເຣື່ອງການຄືນດີກັນ (ຂໍ້ 12).

ຄ. ຖາມນັກຮຽນ: ຫາກທ່ານເປັນ ໂອເນຊີເມ ທ່ານຈະຄິດຢ່າງໃດ?

ງ. ຖາມນັກຮຽນ: ຫາກທ່ານເປັນ ຟີເລໂມນ ທ່ານຈະເຮັດແນວໃດ?

ຈ. ຄຳຕໍ່ລອງຂອງໂປໂລຕໍ່ຟີເລໂມນ ຂໍ້ 17

1. ຖ້າເຈົ້າຖືວ່າເຮົາເປັນເພື່ອນ
2. ຖ້າໂອເນຊີເມ ເຮັດຜິດຫລືຕິດໜີ້ ໂປໂລຂໍເປັນຜູ້ໃຊ້ຄືນ

ສ. ໂປໂລເວົ້າເຖິງອະດີດຟີເລໂມນຕິດໜີ້ຊີວິດ (ຂໍ້ 20).

ຊ. ໂປໂລແນ່ໃຈວ່າຟີເລໂມນຈະເຮັດຕາມຄຳຂໍ (ຂໍ້ 21).

## 5. ຂໍໃຫ້ຜູ້ນຶ່ງອ່ານ 22-25 ຄຳນ້ອນທ້າຍ

ກ. ບອກວ່າຈະກັບໄປຢາມ ຟີເລໂມນ ຫລັງຈາກອອກຄຸກ (ຂໍ້ 22).

ຂ. ເນັ້ນໜັກ ໃຫ້ຟີເລໂມນຮັບໂອເນຊີເມ.

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*